Washington State Department of Social and Health Services
*Aging and Long-Term Support Administration*



# Washington Apple Health (Medicaid) ແລະ Long-Term Services and Supports (LTSS) ສໍາລັບຜູ້ໃຫຍ່

ສໍາຣວດເບິ່ງ:

- ວິທີການສໍາລັບການຮ້ອງຂໍເອົາແລະການຮັບເອົາ Apple Health LTSS.
- ທາງເລືອກສໍາລັບການເບິ່ງແຍງດູແລສໍາລັບບຸກຄົນທີ່ໄດ້ຮັບ Apple Health LTSS.
- ທາງເລືອກເອົາຄວາມຊ່ວຍເຫລືອຈາກຜູ້ເບິ່ງແຍງດູແລ.

*ຂ່າວສານຈາກຜູ້ອຳນວຍການຂອງ...*

# Home and Community Services

ຖ້າຫາກວ່າທ່ານໄດ້ຮັບປື້ມນ້ອຍຫົວນີ້,ແລ້ວທ່ານ (ຫລືຄົນທີ່ທ່ານຮັກ) ກຳລັງຊອກຫາທາງເລືອກສຳລັບຄວາມຊ່ວຍເຫລືອນຳການເບິ່ງແຍງດູແລຂອງທ່ານ.ອັນນີ້ແມ່ນສິ່ງທີ່ບໍ່ເຄີຍມີມາສຳລັບຫລາຍໆຄົນແລະທຸກໆຢ່າງອາດຈະຮູ້ສຶກວ່າບໍ່ຄຸ້ນເຄີຍແລະສັບສົນ.ມັນສາມາດຍາກທີ່ຈະຮູ້ຈັກວ່າການຊ່ວຍເຫລືອແນວໃດແດ່ຈະມີຢູ່,ແລະຈະເຂົ້າເຖິງການບໍລິການໄດ້ແນວໃດແລະຈະຈ່າຍຄ່າມັນໄດ້ແນວໃດ.



Home and Community Services ເປັນພາກສ່ວນນຶ່ງຂອງຣັດຖະບານຂອງຣັດ. ພວກເຮົາຊ່ວຍເຫລືອຜູ້ອາວຸໂສຫລືຜູ້ໃຫຍ່ທີ່ມີຣາຍໄດ້ຕ່ຳຜູ້ທີ່ມີຄວາມເສັຽອົງຄະແລະຄອບຄົວຂອງເຂົາເຈົ້າໃຫ້ໄດ້ຮັບຣາຍຣະອຽດ, ການອູ້ມຊູແລະການບໍລິການເມື່ອເວລາຕ້ອງການການເບິ່ງແຍງດູແລຣະຍະຍາວ.

ພວກເຮົາພູມໃຈວ່າຣັດວໍຊິງຕັນໄດ້ຖືກຮັບຮູ້ວ່າເປັນຜູ້ບຸກເບີກແລະຜູ້ນຳແຫ່ງຊາດໃນການຊ່ວຍເຫລືອຜູ້ໃຫຍ່ທຸກໆຄົນຜູ້ທີ່ຕ້ອງການການເບິ່ງແຍງດູແລໃຫ້ດຳເນີນຕໍ່ໄປເພື່ອຈະດຳຣົງຊີວິດຢູ່ຢ່າງເປັນເອກຣາດຕໍ່ໄປເທົ່າທີ່ສາມາດເປັນໄປໄດ້ຢູ່ໃນສະຖານທີ່ເປັນເຮືອນຫລືຊຸມນຸມຊົນ. ຕາມທີ່ຈິງແລ້ວ, American Association of Retired Persons (AARP) ໄດ້ໃຫ້ລຳດັບໂຄງການຂອງພວກເຮົາຕະລອດມາວ່າເປັນອັນນຶ່ງທີ່ດີທີ່ສຸດຢູ່ໃນປະເທດ.

ອັນນີ້ຫມາຍຄວາມວ່າແນວໃດສຳລັບທ່ານ?ທ່ານມີຫົນທາງແລະທາງເລືອກຫລາຍໆຢ່າງເພື່ອຈະໄດ້ຮັບການເບິ່ງແຍງດູແລທີ່ທ່ານຕ້ອງການ. ທ່ານບໍ່ແມ່ນມີແຕ່ຜູ້ດຽວເມື່ອທ່ານຮຽນຮູ້ກ່ຽວກັບວ່າທາງເລືອກທາງໃດແດ່ທີ່ມີຢູ່ແລະໄດ້ຮັບການບໍລິການຕັ້ງຂຶ້ນ.

ຜູ້ຊ່ຽວຊານການຊ່ວຍເຫລືອສາທາຣະນະແລະພະນັກງານສັງຄົມຂອງພວກເຮົາເປັນນັກວິຊາການຜູ້ທີ່ຈະຊ່ວຍທ່ານໃຫ້ເຂົ້າໃຈທາງເລືອກເອົາຂອງທ່ານແລະທຽບຄວາມຕ້ອງການແລະຄວາມຊອບໃຈຂອງທ່ານໃສ່ການບໍລິການທີ່ມີຄຸນນະພາບຢູ່ໃນຊຸມນຸມຊົນຂອງທ່ານ.

ຂ້າພະເຈົ້າຂໍຊັກຊວນໃຫ້ທ່ານຈົ່ງອ່ານປື້ມນ້ອຍຫົວນີ້ຫມົດແລະຖາມຜູ້ຊ່ຽວຊານການຊ່ວຍເຫລືອສາທາຣະນະແລະພະນັກງານສັງຄົມຂອງທ່ານຄຳຖາມຕ່າງໆທີ່ທ່ານຄິດອອກມາ. ຂ້າພະເຈົ້າຮູ້ຈັກວ່າທ່ານຢູ່ໃນກຳມືທີ່ສາມາດເຮັດໄດ້,ມີຄວາມຮູ້ທຸກຢ່າງ.

ດ້ວຍຄວາມຮັກແພງ,

**Kristin Byrne**
*ຜູ້ອຳນວຍການຊົ່ວຄາວ,*
*Home and Community Services*

# Washington Apple Health (Medicaid)

ແລະ

# Long-Term Services and Supports (LTSS)

ສຳລັບຜູ້ໃຫຍ່

# ທ່ານມີທາງເລືອກເອົາ.

ປຶ້ມນ້ອຍຫົວນີ້ແມ່ນສຳລັບຜູ້ໃຫຍ່ທີ່ມີອາຍຸ18ປີຫລືແກ່ກວ່າ ຜູ້ທີ່ມີບັນຫາສະພາບຊຳເຮື້ອ, ມີພະຍາດ, ຫລືຄວາມເສັຽອົງຄະ,ຕ້ອງການໆຊ່ວຍເຫລືອໃນການເບິ່ງແຍງດູແລ, ແລະຄົ້ນຄົ້ວຫາໂດຍການໃຊ້ Washington Apple Health Long-Term Services and Supports (LTSS) (ຍັງເປັນທີ່ຮູ້ຈັກກັນວ່າແມ່ນ Medicaid) ເພື່ອຊ່ວຍຈ່າຍຄ່າປິ່ນປົວ.

ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອແຕ່ວ່າບໍ່ໄດ້ຄົ້ນຄວ້າເບິ່ງການໃຊ້ Apple Health LTSS ເພື່ອຈະຊ່ວຍຈ່າຍສຳລັບການເບິ່ງແຍງດູແລຂອງທ່ານ, ທ່ານຈະພົບເຫັນວ່າມັນຊ່ວຍເຫລືອໄດ້ຫລາຍເພື່ອຈະເຂົ້າຫາຣາຍຣະອຽດກ່ຽວກັບການບໍຣິການແລະການອູ້ມຊູຣະຍະຍາວຢູ່ໃນແວບໄຊທ໌ຂອງພວກເຮົາຢູ່ທີ່: www.dshs.wa.gov/altsa/long-term-care-services-information.

**ປຶ້ມນ້ອຍຫົວນີ້ຈະຊ່ວຍທ່ານຮຽນຮູ້ເພີ່ມເຕີມກ່ຽວກັບ:**

- ຈະຮ້ອງຂໍເອົາ Apple Health LTSS ໄດ້ຢ່າງໃດ.
- ຂອບເຂດເງື່ອນໄຂໄດ້ຮັບຂອງຣາຍໄດ້ແລະຊັບສິນສຳລັບApple Health LTSS
- ການກອບກູ້ເອົາມູນມໍຣະດົກຂອງເງິນທຸກໆຢ່າງທີ່ທ່ານໄດ້ຮັບ.
- ທາງເລືອກເອົາການເບິ່ງແຍງດູແລຢູ່ໃນເຮືອນແລະຕາມບ່ອນພັກເຊົາແລະແຫລ່ງຊ່ວຍເຫລືອຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບ Apple Health LTSS.
- ແຫລ່ງຊ່ວຍເຫລືອສຳລັບຜູ້ເບິ່ງແຍງດູແລຜູ້ເປັນພີ່ນ້ອງທີ່ບໍ່ຖືກຈ່າຍເງິນໃຫ້ຂອງທ່ານ.

**ແຫລ່ງຊ່ວຍເຫລືອ**

Community Living Connections: 1-855-567-0252

ແວບໄຊທ໌ຂອງ ALTSA: www.dshs.wa.gov/altsa

# ສາລະບານ

ການຮ້ອງຂໍເອົາ Apple Health LTSS .......... 1
**ຈະຮ້ອງຂໍເອົາໄດ້ຢ່າງໃດ** .......... 1
ຮ້ອງຂໍເອົາໂດຍຕົນເອງຫລືໂດຍທາງໄປສະນີ .......... 1
ຮ້ອງຂໍເອົາທາງອອນລາຍນ໌ .......... 1
**ການຂຽນປະກອບໃບຄຳຮ້ອງຂໍ** .......... 2
ການຂໍ້ມູນຂູເພີ້ມເຕີມໃນຣະຫວ່າງການດຳເນີນຄຳຮ້ອງຂໍ .......... 2
**ການກວດທວນຄືນເບິ່ງການເງິນ** .......... 2
**ຂອບເຂດຂອງເງື່ອນໄຂໄດ້ຮັບຂອງຣາຍໄດ້ແລະຊັບສິນ** .......... 3
ຣາຍໄດ .......... 3
ຊັບສິນ .......... 3
ການໂອນຊັບສິນ .......... 4
**ການປະເມີນຜົນເບິ່ງການເບິ່ງແຍງດູແລສ່ວນຕົວ** .......... 5
**ຄາດວ່າແມ່ນຫຍັງຈະເກີດຂຶ້ນເມື່ອຄຳຮ້ອງຂໍຂອງທ່ານໄດ້ຖືກອະນຸມັດແລ້ວ** .......... 6
ຖ້າຫາກວ່າທ່ານບໍ່ຖືກອະນຸມັດໃຫ້ .......... 6
**ຣາຍໄດ້ຂອງທ່ານເມື່ອເວລາທ່ານໄດ້ຮັບ Apple Health LTSS** .......... 7
**ເງິນທຶນສ່ວນຕົວຂອງຜູ້ອາສັຍຢູ່ຊຶ່ງຖືກກຳເອົາໄວ້ໂດຍສະຖາບັນການປິ່ນປົວ** .......... 8
**ການກອບກູ້ເອົາເງິນທຶນຈາກມູນມໍຣະດົກຂອງທ່ານ** .......... 8
**ການຜູກມັດກັມມະສິດໃສ່ຊັບສິນທີ່ດິນເຮືອນຊານ** .......... 10
ທາງເລືອກເອົາການເບິ່ງແຍງດູແລສຳລັບບຸກຄົນຜູ້ທີ່ກຳລັງໄດ້ຮັບ Apple Health LTSS .......... 11
**ການບໍຣິການແລະໂຄງການທີ່ຊ່ວຍທ່ານໃຫ້ອາສັຍຢູ່ໃນເຮືອນ** .......... 11
**ໂຄງການ Medicaid Alternative Care (MAC)** .......... 11
**ຄວາມຊ່ວຍເຫລືອນຳການເບິ່ງແຍງດູແລສ່ວນຕົວ** .......... 12
ຜູ້ໃຫ້ການບໍຣິການສ່ວນບຸກຄົນ (IP) .......... 13
ຫ້ອງການເບິ່ງແຍງດູແລຢູ່ຕາມເຮືອນ .......... 13
ການອູ້ມຊູສຳລັບຜູ້ເບິ່ງແຍງດູແລທີ່ເປັນສະມາຊິກຄອບຄົວທີ່ບໍ່ຖືກຈ່າຍເງິນໃຫ້ .......... 14
**ການຊອກຫາຜູ້ໃຫ້ການບໍຣິການສ່ວນບຸກຄົນ** .......... 14
**ການຊ່ວຍເຫລືອນຳຄວາມຕ້ອງການດ້ານການປິ່ນປົວສຸຂະພາບ** .......... 14
ການເບິ່ງແຍງດູແລທີ່ຖືກຊີ້ນຳໂດຍຕົນເອງ .......... 14
ການແຕ່ງຕັ້ງນາຍພະຍາບານ .......... 14
ໂຄງການ Home Health Care .......... 15
ໂຄງການຮ້ອສປີສ .......... 15
ເຮືອນປິ່ນປົວສຸຂະພາບ .......... 15

**ການບໍລິການແນວອື່ນທີ່ສາມາດຊ່ວຍໄດ** .......... 15
ການບໍລິການກາງເວັນສຳລັບຜູ້ໃຫຍ່ .......... 15
ເທັກໂນໂລຈີຊ່ວຍເຫລືອ .......... 16
ການດັດແປງສະພາບແວດລ້ອມ .......... 16
ບ່ອນຢູ່ອາສັຍທີ່ຖືກອູ້ມຊູຊ່ວຍເຫລືອ .......... 16
ວຽກງານທີ່ຖືກອູ້ມຊູຊ່ວຍເຫລືອ .......... 16
ອາຫານສົ່ງໃຫ້ຢູ່ຕາມເຮືອນ .......... 16
ການຝຶກຝົນສ່ວນບຸກຄົນ .......... 16
ອຸບປະກອນພະຍາບານພິເສດແລະເຄື່ອງໃຊ້ .......... 16
ລະບົບການຕອບຕໍ່ເຫດການສຸກເສີນສ່ວນຕົວ (PERS) .......... 16
ການຂົນສົ່ງໄປມາ .......... 17
ການຝຶກອົບຮົມເພີ້ມພູນຄວາມຊຳນານ .......... 17
ການຝຶກຝົນການຄວບຄຸມເບິ່ງນຳຜູ້ເບິ່ງແຍງດູແລ .......... 17
**ໂຄງການເພີ້ມເຕີມ** .......... 18
ການບໍລິການ New Freedom ທີ່ຖືກຊີ້ນຳທາງໂດຍລູກຄ້າ .......... 18
ໂຄງການ Program of All-Inclusive Care for the Elderly (PACE) .......... 18
ທາງເລືອກສຳລັບບ່ອນຢູ່ອາສັຍແລະການເບິ່ງແຍງດູແລ .......... 18
**ເຮືອນຄອບຄົວຜູ້ໃຫຍ່ແລະສະຖານທີ່ອາສັຍຢູ່ທີ່ໄດ້ຮັບຄວາມຊ່ວຍເຫລືອ** .......... 19
**ສະຖານທີ່ເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງ** .......... 19
ການກັບຄືນມາເຮືອນຫລັງຈາກການຢູ່ໃນສະຖານທີ່ເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງຫລືໂຮງພະຍາບານ .......... 20
ທ່ານມີທາງເລືອກ .......... 20
**ໂຄງການ Community Living Connections (CLC)** .......... 21
**ໂຄງການ Tailored Supports for Older Adults (TSOA)** .......... 21
TSOA ສຳລັບບຸກຄົນຜູ້ທີ່ມີຜູ້ເບິ່ງແຍງດູແລຜູ້ທີ່ບໍ່ຖືກຈ່າຍເງິນໃຫ້ .......... 22
TSOA ສຳລັບບຸກຄົນຜູ້ທີ່ມີຜູ້ເບິ່ງແຍງດູແລຜູ້ທີ່ບໍ່ຖືກຈ່າຍເງິນໃຫ້ .......... 22
**ແຫລ່ງຊ່ວຍເຫລືອເພີ້ມເຕີມສຳລັບຜູ້ເບິ່ງແຍງດູແລຜູ້ທີ່ບໍ່ຖືກຈ່າຍເງິນໃຫ້** .......... 22
ໂຄງການ Family Caregiver Support Program (FCSP) .......... 22
ລາຍລະອຽດເພີ້ມເຕີມ .......... 23
**ການສົ່ງເອົາເອກສານຕີພິມ** .......... 23
**ເລກໂທລະສັບຂອງພະແນກບໍລິການຢູ່ຕາມເຮືອນແລະຊຸມນຸມຊົນ** .......... 24
**ພະແນກປ້ອງກັນຜູ້ໃຫຍ່ (APS)** .......... 24



- Home and Community Services (HCS) ເປັນສ່ວນນຶ່ງຂອງຜະແນກການປົກຄອງຄົນຊະລາແລະການອູ້ມຊູຣະຍະຍາວ (ALTSA), ພະແນກການປົກຄອງອັນນຶ່ງທີ່ຢູ່ພາຍໃນກົມສັງຄົມສົງເຄາະແລະສາທາຣະນະສຸກ (DSHS).

ພະນັກງານຂອງຫ້ອງກາn HCS ເອົາການບໍຣິການແລະການອູ້ມຊູມາກມາຍຫລາຍຢ່າງໃຫ້ແກ່ທ່ານ.

# ການຮ້ອງຂໍເອົາ Apple Health LTSS

Apple Health LTSS ແມ່ນໂຄງການປະກັນພັຍສຸຂະພາບຂອງຣັດຖະບານທີ່ຈ່າຍຄ່າການບໍຣິການ ຣະຍະຍາວຕ່າງໆແລະການອູ້ມຊູສຳລັບບຸກຄົນແກ່ຄົນທີ່ມີຣາຍໄດ້ແລະຊັບສິນຢູ່ໃນຂອບເຂດຈຳກັດທີ່ສຸດ.

ຖ້າທ່ານຫາກມີເງື່ອນໄຂໄດ້ຮັບ, Apple Health LTSS ຈະຈ່າຍສຳລັບຄ່າບໍຣິການຕ່າງໆຢູ່ໃນເຮືອນ ຂອງທ່ານເອງ, ຕາມສະຖານທີ່ເບິ່ງແຍງດູແລຢູ່ຕາມບັນພັກຊຸມນຸມຊົນ (ເຮືອນແບບຄອບຄົວສຳລັບຜູ້ໃຫຍ່ ຫລື ສະຖານທີ່ດຳຣົງຊີວິດມີຄົນຊ່ວຍເຫລືອ) ຫລືສະຖານທີ່ເບິ່ງແຍງຜູ້ເຖົ້າ.

## ຈະຮ້ອງຂໍເອົາໄດ້ຢ່າງໃດ

ຖ້າທ່ານຫາກວ່າທ່ານມີອາຍຸ 18 ປີຫລືແກ່ກວ່າ, ທ່ານສາມາດຂໍເອົາ Apple Health LTSS ໄດ້ໂດຍຜ່ານຫ້ອງການບໍຣິການຢູ່ຕາມເຮືອນແລະຊຸມນຸມຊົນ (HCS) ຫລືທາງອອນລາຍນ໌.

ມັນມີສາມພາກສ່ວນໃຫຍ່ທີ່ສຳຄັນໃນວິທີການຂອງການຮ້ອງຂໍເອົາ:

1. ການຂຽນປະກອບແລະການຍື່ນໃບຄຳຮ້ອງເຂົ້າມາ.
2. ການທົບທວນເບິ່ງການເງິນເພື່ອຈະພິຈາຣະນາເບິ່ງເງື່ອນໄຂໄດ້ຮັບທາງດ້ານການເງິນຂອງທ່ານ.
3. ການປະເມີນຜົນເບິ່ງການເບິ່ງແຍງດູແລສ່ວນຕົວເພື່ອຈະພິຈາຣະນາເບິ່ງເງື່ອນໄຂໄດ້ຮັບສຳລັບ ການທຳງານໄດ້ຂອງທ່ານ.

### ຮ້ອງຂໍເອົາໂດຍຕົນເອງຫລືໂດຍທາງໄປສະນີ

ໂທຫາຫລືແວ່ໄປຢ້ຽມຢາມຫ້ອງການHCSເພື່ອຈະເອົາ ໃບຄຳຮ້ອງຂໍ. ເລກໂທຣະສັບສຳລັບຫ້ອງການHCS ມີຢູ່ຫນ້າ 24 ຂອງປື້ມນ້ອຍຫົວນີ້.ໃບຟອມຄຳຮ້ອງຂໍສາມາດຖືກ:

- ສົ່ງໄປໃຫ້ທ່ານ.
- ຈັບເອົາໄດ້ຢູ່ຫ້ອງການ HCS.
- ດາວໂຫລດແລະພິມອອກມາຈາກອິນເຕີແນດຢູ່ທີ່: www.hca.wa.gov/health-care-services-supports/forms-and-publications ພາຍໃຕ້ 18-005 Washington Apple Health Application for Aged, Blind, Disabled or long-term care coverage. ເພື່ອຈະຊອກຫາເອກສານທາງອອນລາຍນ໌ໄດ້ງ່າຍໆ,ພວກເຮົາຂໍແນະນຳໃຫ້ຕີ 18-005 ເຂົ້າໃສ່ໃນ ເຄື່ອງມືຊອກຫາຢູ່ໃນແວບເພຈ໌ຂອງ Health Care Authority (HCA). ເອກສານຈະມີຄຳຊີ້ນຳວ່າຈະຍື່ນໃບຄຳຮ້ອງຂອງທ່ານໄດ້ຢ່າງໃດ.

### ຮ້ອງຂໍເອົາທາງອອນລາຍນ໌

ເພື່ອຈະປະກອບແລະສົ່ງໃບຄຳຮ້ອງທາງອອນລາຍນ໌, ໄປທີ່ www.washingtonconnection.org/home/ ແລະບີບໃສ່"Apply Now." ອັນນີ້ຈະພາທ່ານໄປຫາຫນ້າອິນເຕີແນດທີ່ປອດພັຍ. ຣາຍຣະອຽດທຸກໆຢ່າງທີ່ທ່ານຕີເຂົ້າຢູ່ໃນໃບຄຳຮ້ອງຈະຖືກປ້ອງກັນ.

ຖ້າຫາກວ່າທ່ານມີອາຍຸຕ່ຳກວ່າ 65 ປີແລະບໍ່ໄດ້ຮັບ Medicare, ຮ້ອງຂໍເອົາ Apple Health LTSS ຜ່ານ Washington Health Benefit Exchange www.wahealthplanfinder.org ແລະບີບໃສ່ "Apply Now." ເພື່ອຈະຮ້ອງຂໍເອົາການຄຸ້ມກັນແລະຊີ້ບອກການຮ້ອງຂໍເອົາການປິ່ນປົວຣະຍະຍາວແລະການອູ້ມຊູ.

## ການຂຽນປະກອບໃບຄຳຮ້ອງ

ປະຕິບັດຕາມຄຳຊີ້ນຳແລະຕອບທຸກໆຄຳຖາມຢູ່ໃນໃບຄຳຮ້ອງ. ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອໃນການປະກອບໃບຄຳຮ້ອງ, ໂທຫາຫ້ອງການ HCS ທ້ອງຖິ່ນຂອງທ່ານ. ເລກໂທຣະສັບສຳລັບຫ້ອງການ HCS ແມ່ນຢູ່ຫນ້າ 24 ຂອງປື້ມຄູ່ມືຫົວນີ້ແລະທາງອອນລາຍນ໌ຢູ່ທີ່ www.dshs.wa.gov/ALTSA/resources.

ລາຍລະອຽດທີ່ທ່ານຈະຕ້ອງການທີ່ຈະເອົາໃຫ້ລວມເອົາ:

- ເລກຄວາມປອດພັຍຂອງສັງຄົມ.
- ຫລັກຖານຂອງບັດປະຈຳຕົວ.
- ຫລັກຖານຂອງລາຍໄດ້.
- ການອະນຸຍາດສຳລັບການພິສູດຊັບສິນທາງເອເລກໂຕຣນິກ.
- ບັນທຶກຂອງຊັບສິນ (ເຊັ່ນວ່າໃບແຈ້ງການຈາກທະນາຄານ, ໃບແຈ້ງການພາສີຕາດິນ, ປະກັນພັຍຊີວິດ) . ຊັບສິນຢູ່ໃນສະຖາບັນການເງິນອາດຈະຖືກພິສູດໂດຍຜ່ານລະບົບ Asset Verification System (AVS).
- ເອກສານການເຂົ້າເມືອງຫລືເອກສານສຳລັບຄົນຕ່າງດ້າວ
- ຫລັກຖານຂອງການເປັນສັນຊາດຖ້າຫາກວ່າທ່ານບໍ່ໄດ້ຮັບ Medicare ຫລື ເງິນຄວາມປອດພັຍເພີ້ມເຕີມ(SSI), ຫລືເງິນສະວັດດີການຄວາມເສັຽອົງຄະຄວາມປອດພັຍຂອງສັງຄົມ.

### ການອູ້ມຊູເພີ້ມເຕີມໃນລະຫວ່າງການດຳເນີນຄຳຮ້ອງ

ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອໃນລະຫວ່າງການດຳເນີນຄຳຮ້ອງຂໍ,ສອບຖາມນຳພະນັກງານ HCS ເພື່ອຄວາມຊ່ວຍເຫລືອ.

ພະນັກງານຂອງ HCS ອາດສາມາດສາມາດທີ່ຈະເອົາໃຫ້ທ່ານໄດ້ເປັນຕົວໜັງສືສຳລັບຄົນຕາບອດ, ເອກສານທີ່ຖືກແປພາສາ, ໃນແບບຕົວພິມໃຫຍ່, ຫລືການໃຊ້ລະບົບເຄື່ອງຊ່ວຍຟັງສຽງ, ລະບົບ TTYs (ໂທຣະສັບສິ່ງໂທຣະເລກ) ຫລື ນາຍພາສາທີ່ມີຄຸນສົມບັດ/ມີໃບປະກາດຢັ້ງຢືນ.

ຖ້າຫາກວ່າທ່ານຢາກໃຫ້ຄົນໃດຄົນນຶ່ງອີກຮ້ອງຂໍໃຫ້ທ່ານ,ທ່ານຕ້ອງໄດ້ເຊັນຊື່ໃສ່ໃບຟອມອະນຸຍາດໃຫ້ຄົນອື່ນທີ່ຈະເປັນຕົວແທນຂອງທ່ານໃນລະຫວ່າງການດຳເນີນຄຳຮ້ອງ.ໃບຟອມອະນຸຍາດຕ້ອງຖືກແກ້ໄຂໃຫມ່ທຸກໆປີ.

ໃຫ້ໝັ້ນໃຈວ່າບຸກຄົນຜູ້ທີ່ທ່ານແຕ່ງຕັ້ງນັ້ນຕ້ອງຕຽມພ້ອມທີ່ຈະຕອບຄຳຖາມຕ່າງໆກ່ຽວກັບເຣື່ອງສ່ວນຕົວແລະສະຖານະການໆເງິນຂອງທ່ານ.

ລາຍລະອຽດເພີ້ມເຕີມກ່ຽວກັບວິທີການດຳເນີນການຮ້ອງຂໍສຳລັບການເບິ່ງແຍງດູແລແລະການອູ້ມຊູລະຍະຍາວສາມາດຖືກພົບເຫັນໄດ້ຢູ່ທີ່: www.hca.wa.gov/health-care-services-supports/program-administration/applications-ltss.

## ການກວດທວນຄືນເບິ່ງການເງິນ

ເມື່ອໃດທ່ານໄດ້ປະກອບຄຳຮ້ອງຂອງທ່ານສຳເຣັດແລ້ວ, ຜູ້ຊ່ຽວຊານດ້ານການເງິນຂອງ HCS ຈະເຣັດວຽກນຳທ່ານເພື່ອຈະເບິ່ງວ່າທ່ານຈະມີເງື່ອນໄຂໄດ້ຮັບອີງຕາມການເງິນບໍ່ເພື່ອຈະໄດ້ຮັບ Apple Health LTSS. ມັນຂຶ້ນກັບວ່າແນວໃດຈະດີສຸດສຳຮັບທ່ານ, ອັນນີ້ອາດຈະເປັນການສຳພາດໂດຍຕົນເອງຫລື ການສຳພາດທາງໂທຣະສັບ.

ກົດລະບຽບຂອງ Apple Health LTSS ສາມາດຖືກພົບເຫັນໄດ້ຢູ່ທີ່: www.hca.wa.gov/health-care-services-supports/program-administration/apple-health-eligibility-manual.

ກົດລະບຽບຂອງ Washington Apple Health LTSS (Medicaid) ສາມາດຖືກພົບເຫັນໄດ້ຢູ່ທີ່: www.hca.wa.gov/health-care-services-supports/program-administration/apple-health-eligibility-manual.

ເມື່ອເວລາທ່ານເວົ້າລົມນຳຜູ້ຊ່ຽວຊານດ້ານການເງິນ,ທ່ານສາມາດອະທິບາຍໄດ້ຢ່າງລະອຽດກວ່າກ່ຽວກັບຄຳຕອບຢູ່ໃນໃບຄຳຮ້ອງຂໍຂອງທ່ານ.

ທ່ານຕ້ອງໄດ້ແຈ້ງບອກຊັບສິນທຸກໆຢ່າງທີ່ທ່ານມີຢູ່ໃນເວລາຮ້ອງຂໍເອົາ Apple Health LTSS.ຈົ່ງເບິ່ງພາກສ່ວນຕໍ່ໄປ "ຂອບເຂດຂອງເງື່ອນໄຂໄດ້ຮັບສຳລັບລາຍໄດ້ແລະຊັບສິນ { ເພື່ອລາຍລະອຽດເພີ້ມເຕີມກ່ຽວກັບຂອບເຂດຂອງເງື່ອນໄຂໄດ້ຮັບສຳລັບລາຍໄດ້ແລະຊັບສິນແລະການໂອນຊັບສິນທີ່ຜູ້ຊ່ຽວຊານການຊ່ວຍເຫລືອຂອງຫລວງຈະກວດເບິ່ງຄືນນຳທ່ານ.

ພະນັກງານຂອງHCSສາມາດອະທິບາຍກົດລະບຽບຂອງ Apple Health LTSS ໄດ້ແຕ່ບໍ່ສາມາດໃຫ້ຄຳແນະນຳແກ່ທ່ານໃນເຣື່ອງສ່ວນຕົວ, ການເງິນ, ຫລືຄຳແນະນຳດ້ານກົດໝາຍ.ທ່ານຄວນຈະຕ້ອງການທີ່ຈະເວົ້ານຳທະນາຍຄວາມຜູ້ທີ່ເຂົ້າໃຈເຣື່ອງກົດລະບຽບ Apple Health ຖ້າທ່ານຕ້ອງການຄວາມຊ່ວຍໃນການຕັດສິນໃຈ.

ພະນັກງານຢູ່ທີ່ຫ້ອງການ Community Living Connections ຫລືຫ້ອງການ Area Agency on Aging office ທ້ອງຖິ່ນຂອງທ່ານສາມາດຊ່ວຍທ່ານຊອກຫາຄວາມຊ່ວຍເຫລືອທາງດ້ານກົດຫມາຍໃຫ້ແກ່ທ່ານໄດ້. ໃຫ້ເບິ່ງໜ້າ 21 ເພື່ອລາຍລະອຽດການຕິດຕໍ່ຫາ.

## ຂອບເຂດເງື່ອນໄຂໄດ້ຮັບສຳລັບລາຍໄດ້ແລະຊັບສິນ

ທ່ານຕ້ອງສອດຄ່ອງນຳກົດກຳນົດຂອງລາຍໄດ້ແລະຊັບສິນຕ່າງໆຫລາຍແນວກ່ອນຈະມີເງື່ອນໄຂໄດ້ຮັບ Apple Health LTSS. ຂອບເຂດກຳນົດລາຍໄດ້ແລະຊັບສິນຕ່າງໆແມ່ນຖືກກໍ່ຕັ້ງໂດຍກົດໝາຍແລະກໍ່ມີການປ່ຽນແປງແຕ່ລະປີ.

### ລາຍໄດ້

ກຳນົດຂອບເຂດລາຍໄດ້ຂອງ Apple Health LTSS ແຕກຕ່າງກັນໄປຊຶ່ງຂຶ້ນກັບການບໍຣິການຕ່າງໆທີ່ທ່ານຕ້ອງການ, ສະພາບການດຳຣົງຊີວິດຂອງທ່ານ, ແລະສະຖານະພາບການແຕ່ງງານຂອງທ່ານ. ຫ້ອງການ HCS ຈະມີລາຍລະອຽດປັດຈຸບັນໄວ້ໃຫ້.ມາດຕະຖານຂອງລາຍໄດ້ແລະຊັບສິນຂອງ Apple Health LTSS. ທຸກໆຢ່າງຈະຖືກພົບເຫັນຢູ່ທີ່ www.hca.wa.gov/health-care-services-supports/program-standard-income-and-resources.

### ຊັບສິນ

ທ່ານຕ້ອງໄດ້ແຈ້ງບອກຊັບສິນທຸກໆຢ່າງທີ່ທ່ານມີຢູ່ໃນເວລາຮ້ອງຂໍເອົາ Apple Health LTSS. ຊັບສິນຕ່າງໆລວມເອົາເງິນ, ຊັບສິນຕ່າງໆ, ຊັບສິນບັດທີ່ທ່ານມີ ເຊັ່ນເງິນສົດ,ບັນຊີທະນາຄານຕ່າງໆ, ສະຕ໊ອກແລະເງິນບອນດ໌ຕ່າງໆ,ແຜນການເບັ້ຽບຳນານ, ເງິນຈ່າຍປະຈຳປີ,ນະໂຍບາຍປະກັນພັຍຊີວິດ, ສັນຍາຊື້ຂາຍ, ຍານພາຫານະຕ່າງໆ ແລະທີ່ດິນທີ່ບໍ່ແມ່ນສ່ວນນຶ່ງຂອງບ່ອນຢູ່ອາສັຍຕົ້ນຕໍຂອງທ່ານ. ຖ້າຫາກວ່າແຕ່ງງານ, ຊັບສິນຂອງຜົວເມັຽທັງສອງຄົນຈະຕ້ອງຖືກໃຊ້ເພື່ອຈະພິຈາຣະນາເບິ່ງເງື່ອນໄຂໄດ້ຮັບ Apple Health LTSS ຂອງທ່ານ.

ຊັບສິນ "ທີ່ຖືກຍົກເວັ້ນ { ບາງຢ່າງຈະບໍ່ຖືກໄລ່ໃສ່ກຳນົດຂອບເຂດຂອງລາຍໄດ້.ຊັບສິນທີ່ຖືກຍົກເວັ້ນສາມາດລວມເອົາເຮືອນຂອງທ່ານ, ເຄື່ອງໃຊ້ໃນບ້ານ ແລະຊັບສິນບັດສ່ວນຕົວຕ່າງໆ, ຣົດຄັນດຽວ, ປະກັນພັຍຊີວິດທີ່ມູນຄ່າຫນ້າຕັກບໍ່ກາຍເກີນ$1,500,ຫລຸມຝັງສົບ, ແລະແຜນການຝັງສົບຈ່າຍກ່ອນລ່ວງຫນ້າ.

ທ່ານຕ້ອງໄດ້ແຈ້ງບອກຊັບສິນທຸກໆຢ່າງທີ່ທ່ານມີຢູ່ໃນເວລາຮ້ອງຂໍເອົາApple Health LTSS.



ການປະເມີນຜົນ CARE ຂອງທ່ານ ຊ່ວຍພິຈາລະນາເບິ່ງວ່າທ່ານມີເງື່ອນໄຂອີງຕາມຄວາມສາມາດທີ່ຈະໄດ້ຮັບ Apple Health LTSS ຫລືບໍ່.

### ການໂອນຊັບສິນ

ກົດໝາຍຂອງຣັດຖະບານກາງກ່າວວ່າຂອງຂວັນບາງຢ່າງຫລືການໂອນທີ່ຖືກເພື່ອຈະມີສິດໄດ້ຮັບApple Health LTSSຈະຕ້ອງຖືກປັບໄໝລົງໂທດ. ກົດໝາຍຂອງຣັດຍັງບັນຈຸການປັບໄໝລົງໂທດອີກຄືກັນສຳລັບບຸກຄົນຜູ້ທີ່ໄດ້ຮັບຊັບສິນທີ່ຖືກໂອນໃນມູນຄ່າຕ່ຳກວ່າມູນຄ່າຕາມທ້ອງຕະລາດທີ່ຍຸຕິທັມ.

ພາຍໃຕ້ກົດໝາຍຂອງຣັດແລະຂອງຣັດບານກາງ, ຜູ້ຊ່ຽວຊານບໍຣິການດ້ານການເງິນດ້ານHCSຕ້ອງທົບທວນຄືນເບິ່ງການໂອນຊັບສິນທຸກໆຢ່າງທີ່ເກີດຂຶ້ນພາຍໃນ60ເດືອນຂອງວັນທີທີ່ທ່ານຮ້ອງຂໍເອົາການບໍຣິການສະລະສິດຢູ່ສະຖານທີ່ປິ່ນປົວຫລືຢູ່ຕາມເຮືອນແລະຊຸມນຸມຊົນ.ສິ່ງເຫລົ່ານີ້ຕ້ອງຖືກລາຍງານໂດຍລູກຄ້າແຕ່ວ່າອາດຈະຖືກພົບເຫັນອີກຄືກັນໂດຍຜ່ານຣະບົບການພິສູດຊັບສິນ.

ຖ້າຫາກວ່າຊັບສິນໄດ້ຖືກໂອນພາຍໃນຂອບເຂດເວລານີ້ ແລະທ່ານບໍ່ໄດ້ຮັບຣາຄາມູນຄ່າຍຸຕິທັມຕາມທ້ອງຕະຈາກສິ່ງເຫລົ່ານັ້ນ, ທ່ານອາດຈະບໍ່ມີເງື່ອນໄຂໄດ້ຮັບການບໍຣິການດູແລຣະຍະຍາວຂອງApple Health LTSSໃນຊ່ວງຣະຍາເວລາໜຶ່ງ.

ກົດໝາຍຂອງຣັດຖະບານກາງກ່າວວ່າຂອງຂວັນບາງຢ່າງຫລືການໂອນທີ່ຖືກເຣັດເພື່ອຈະມີສິດໄດ້ຮັບApple Health LTSSຈະຕ້ອງຖືກປັບໄໝລົງໂທດ. ກົດໝາຍຂອງຣັດຍັງບັນຈຸການປັບໄໝລົງໂທດອີກຄືກັນສຳລັບບຸກຄົນຜູ້ທີ່ໄດ້ຮັບຊັບສິນທີ່ຖືກໂອນໃນມູນຄ່າຕ່ຳກວ່າມູນຄ່າຕາມທ້ອງຕະລາດທີ່ຍຸຕິທັມ.

ທ່ານສາມາດໂອນເຮືອນຂອງທ່ານໂດຍບໍ່ຖືກການປັບໄໝລົງໂທດໄປເຖິງ:

- ຜົວເມັຽຂອງທ່ານ.
- ອ້າຍເອື້ອຍນ້ອງຄືງໆຜູ້ທີ່ມີຜົນປະໂຍດໃນເງິນໃນເຮືອນແລະໄດ້ອາສັຍຢູ່ທີ່ນັ້ນເປັນເວລາຢ່າງໜ້ອຍໜຶ່ງປີໃນທັນໃດກ່ອນວັນທີທີ່ມີເງື່ອນໄຂໄດ້ຮັບ Apple Health LTSS.
- ລູກຫວັງເພິ່ງທີ່ມີອາຍຸຕ່ຳກວ່າ 21 ປີ.
- ລູກຜູ້ທີ່ຕາບອດຫລືເສັຽອົງຄະ.
- ລູກຜູ້ໃຫຍ່ທີ່ໄດ້ອາສັຍຢູ່ນຳທ່ານແລະໄດ້ໃຫ້ການເບິ່ງແຍງດູແລເພື່ອຈະເຮັດໃຫ້ທ່ານຍັງຢູ່ໃນເຮືອນຢູ່ຕໍ່ໄປເປັນເວລາສອງປີເພື່ອວ່າຈະຍັງຢູ່ໃນເຮືອນຄືເກົ່າໂດຍທັນທີກ່ອນວັນທີຂອງເງື່ອນໄຂໄດ້ຮັບ Apple Health LTSS.

## ການປະເມີນເບິ່ງການເບິ່ງແຍງດູແລສ່ວນຕົວ

ໃນຣະຫວ່າງການປະເມີນຜົນການເບິ່ງແຍງດູແລສ່ວນຕົວຂອງທ່ານ,ຍັງເປັນທີ່ຮູ້ຈັກກັນອີກວ່າແມ່ນ Comprehensive Assessment Reporting & Evaluation (CARE) ຂອງທ່ານ, ພະນັກງານການບໍຣິການສັງຄົມຫາ່ສມາເຮືອນຂອງທ່ານແລະເວົ້ານຳທ່ານເປັນເວລາດົນນານ. ການສຳພາດອັນນີ້ອະນຸຍາດໃຫ້ພະນັກງານບໍຣິການສັງຄົມເພື່ອຈະເຂົ້າໃຈແລະຕີຣາຄາປະເມີນຜົນເບິ່ງສິ່ງທີ່ເກີດຂຶ້ນຢູ່ໃນປັດຈຸບັນຢູ່ໃນຊີວິດວັນຕໍ່ວັນຂອງທ່ານແລະຄວາມຊ່ວຍເຫລືອຊະນິດໃດແດ່ທີ່ທ່ານຕ້ອງການ. ທ່ານຈະຖືກຖາມກ່ຽວກັບວ່າການຊ່ວຍເຫລືອແນວໃດແດ່ທີ່ທ່ານໄດ້ຮັບເພື່ອຈະເຮັດກິຈກັມຂອງການດຳຣົງຊີວິດໃຫ້ສຳເຣັດໄດ້ແນວໃດເຊັ່ນວ່າການກິນເຂົ້າ, ການນຸ່ງເຄື່ອງ, ການອາບນ້ຳ, ການຍ່າງໄປມາແລະການໃຊ້ຫ້ອງນ້ຳ.

ການປະເມີນຜົນ CARE ອັນນີ້ໄດ້ຖືກໃຊ້ເພື່ອຈະພິຈາຣະນາເບິ່ງວ່າລະດັບຂອງການເບິ່ງແຍງດູແລທີ່ທ່ານຕ້ອງການເຮັດໃຫ້ທ່ານມີເງື່ອນໄຂໄດ້ຮັບອີງຕາມການທຳງານໄດ້ຫລືບໍ່ເພື່ອຈະໄດ້ຮັບ Apple Health LTSS.

ຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບApple Health LTSS,ພະນັກງານບໍຣິການສັງຄົມຈະກວດເບິ່ງຄືນໃນທາງເລືອກເອົາການເບິ່ງແຍງດູແລຂອງທ່ານນຳທ່ານ,ຈະຊ່ວຍເຫລືອທ່ານພັດທະນາແຜນການປິ່ນປົວສ່ວນບຸກຄົນແລະປະສານງານການແຕ່ງຕັ້ງການປິ່ນປົວຂອງທ່ານ. ຈົ່ງເບິ່ງຫນ້າ11ສຳລັບການກວດເບິ່ງຄືນໃນທາງເລືອກເອົາການບໍຣິການບາງຢ່າງຊຶ່ງອາດຈະມີໄວ້ໃຫ້ແກ່ທ່ານ. ມັນຈະຊ່ວຍເຫລືອໄດ້ຫລາຍທີ່ຈະອ່ານພາກສ່ວນນີ້ກ່ອນທີ່ທ່ານຈະພົບກັບພະນັກງານສັງຄົມ.

ເປັນພາກສ່ວນນຶ່ງຂອງການປະເມີນຜົນອັນຄົບຖ້ວນ CARE ຂອງທ່ານ, ນາຍພະຍາບານສາມາດມີເວລາວ່າງເພື່ອຈະຊ່ວຍປະເມີນຜົນແລະວາງແຜນວ່າຄວາມຕ້ອງການຊະນິດໃດແດ່ທີ່ທ່ານຈະຕ້ອງການນຳພາລະຫນ້າທີ່ການເບິ່ງແຍງດູແລສຸຂະພາບທີ່ຊຳນານ. ອັນນີ້ອາດຈະເປັນການປຶກສາຫາລືຣະຫວ່າງນາຍພະຍາບານແລະພະນັກງານບໍຣິການສັງຄົມຂອງທ່ານ, ຫລືການໂທຣະສັບຫາຫລືການຢັ້ຽມຢາມເຮືອນຣະຫວ່າງທ່ານແລະນາຍພະຍາບານ.

ທ່ານຈະໄດ້ຮັບຫນັງສືບອກໃຫ້ທ່ານຮູ້ຈັກວ່າທ່ານໄດ້ຖືກອະນຸມັດສຳລັບການຄຸ້ມກັນ Apple Health LTSS.

ຫລາຍໆຄົນມີຄອບຄົວແລະຫມູ່ເພື່ອນກຳລັງຊ່ວຍເຫລືອຢູ່ແລ້ວນຳການເບິ່ງແຍງດູແລ. ຕົວຢ່າງວ່າ, ຫລານຊາຍຂອງທ່ານອາດຈະພາທ່ານໄປຕະລາດຊື້ຂອງກິນຫລືພາໄປຫາທ່ານຫມໍ, ລູກສາວຂອງທ່ານອາດຈະຊ່ວຍທ່ານຈ່າຍໃບບິນ, ແລະຫມູ່ເພື່ອນອາດຈະມາຮັບເອົາທ່ານທຸກໆອາທິດເພື່ອຈະໄປງານທາງສາສະນາ.

ເວົ້າລົມນຳຄອບຄົວແລະຫມູ່ເພື່ອນເຫລົ່ານີ້ແລະເບິ່ງວ່າເຂົາເຈົ້າຈະ,ແລະສາມາດທີ່ຈະ,ດຳເນີນທີ່ຈະເຮັດສິ່ງເຫລົ່ານີ້ຢູ່ຕໍ່ໄປຫລືບໍ່ກ່ອນທີ່ທ່ານຈະພົບກັບພະນັກງານບໍຣິການສັງຄົມຂອງທ່ານ.

## ຄາດວ່າຈະມີຫຍັງເກີດຂື້ນເມື່ອເວລາຄຳຮ້ອງຂອງທ່ານໄດ້ຖືກອະນຸມັດ.

ທ່ານຈະໄດ້ຮັບໜັງສືບອກໃຫ້ທ່ານຮູ້ຈັກວ່າທ່ານໄດ້ຖືກອະນຸມັດສຳລັບການຄຸ້ມກັນ Apple Health LTSS.

ໜັງສືຈະບອກທ່ານວ່າທ່ານຈະເກັບຮັກສາລາຍໄດ້ຂອງທ່ານໄວ້ໄດ້ຫລາຍປານໃດສຳລັບຄວາມຕ້ອງການສ່ວນຕົວຂອງທ່ານ, ການອູ້ມຊູຜົວເມັຽ, ເງິນອະນຸມັດການດູແລຮັກສາບ້ານ, ຄ່າທຳນຽມປະກັນພັຍສຸຂະພາບ, ຄ່າໃຊ້ຈ່າຍນຳການພະຍາບານທີ່ຈຳເປັນຊຶ່ງບໍ່ຖືກຄຸ້ມກັນໂດຍApple Health LTSS,ແລະທ່ານຈະຕ້ອງໄດ້ຈ່າຍໃຫ້ຜູ້ໃຫ້
ການບໍຣິການຂອງທ່ານເທົ່າໃດໄປໃສ່ການເບິ່ງແຍງດູແລຂອງທ່ານ (ຄວາມຮັບຜິດຊອບຂອງລູກຄ້າ) . ໃຫ້ເບິ່ງພາກສ່ວນຕໍ່ໄປ, **ຣາຍໄດ້ຂອງທ່ານໃນເມື່ອທ່ານຫາກໄດ້ຮັບ Apple Health LTSS ແລ້ວ,** ເພື່ອຣາຍຣະອຽດເພີ່ມເຕີມ.

ໃຫ້ຕິດຕໍ່ຫາບຸກຄົນຜູ້ທີ່ສົ່ງໜັງສືໄປຫາທ່ານຖ້າທ່ານມີຄຳຖາມແນວໃດກ່ຽວກັບແມ່ນຫຍັງແດ່ຢູ່ໃນໜັງສືອະນຸມັດນັ້ນ.

ທ່ານຈະໄດ້ຮັບບັດບໍຣິການ Provider One Services Card ເພື່ອຈະເຂົ້າຫາການບໍຣິການເຊັ່ນວ່າການປິ່ນປົວສຸຂະພາບ.ຖ້າຫາກວ່າທ່ານບໍ່ໄດ້ຮັບ Medicare, ທ່ານຈະຖືກຈົດຊື່ເຂົ້າໃສ່ໂຄງການປິ່ນປົວທີ່ຖືກຄວບຄຸມນຳຂອງ Apple Health LTSS; www.hca.wa.gov/health-care-services-supports/apple-health-medicaid-coverage/apple-health-managed-care. ຖ້າຫາກວ່າທ່ານໄດ້ຮັບ Medicare,ເງິນຈ່າຍຮ່ວມທີ່ກ່ຽວພັນນຳ Medicare ຂອງທ່ານສ່ວນຫລາຍຈະຖືກຄຸ້ມກັນ.ເມື່ອໃດທ່ານມີເງື່ອນໄຂໄດ້ຮັບApple Health LTSSແລ້ວ,
ທ່ານຈະຖືກຈົດຊື່ເຂົ້າໃນແຜນການຢາສັ່ງຊື້ຈາກທ່ານໝໍ Medicare D ທີ່ຫລວງເສັຽຊ່ວຍຖ້າຫາກວ່າທ່ານຍັງບໍ່ທັນມີເທື່ອ. ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບໂຄງການ Medicare ແວ່ເຂົ້າຢ້ຽມ: www.hca.wa.gov/health-care-services-supports/program-administration/medicare-and-long-term-care.

ທ່ານຈະໄດ້ຮັບເອກະສານ Health Care Coverage and Responsibility (HCA 18-003) ທີ່ບອກເຖິງສິດທິແລະຄວາມຮັບຜິດຊອບຕ່າງໆຂອງທ່ານເມື່ອທ່ານໄດ້ຮັບະປປລເຫເາລທຮັ່ຖສສແລ້ວສຳລັບຄົນອາຍຸແກ່,ຕາບອດ,ເສັຽອົງຄະຫລືຢູ່ໃນຄວາມຕ້ອງການການບໍຣິການແລະການອູ້ມຊູຣະຍະຍາວ. ໃບໂກປີຂອງ HCA 18-011 ຈະມີໄວ້ໃຫ້ໂດຍການຕີພິມ 18-011 ເຂົ້າໃສ່ເຄື່ອງມືຊອກຫາຢູ່ທີ່ www.hca.wa.gov/health-care-services-supports/forms-and-publications.

ເງື່ອນໄຂໄດ້ຮັບດ້ານການເງິນແລະຄວາມສາມາດເຮັດໄດ້ຂອງທ່ານທີ່ຈະໄດ້ຮັບການຊ່ວຍເຫລືອApple Health LTSSຈະໄດ້ຖືກທົບທວນຄືນເບິ່ງຢ່າງໜ້ອຍປີລະເທື່ອແລະຫລັງຈາກການແປ່ນແປງສຳຄັນຢູ່ໃນສະພາບຂອງທ່ານ.

### ຖ້າຫາກວ່າທ່ານບໍ່ຖືກອະນຸມັດໃຫ້

ທ່ານຈະໄດ້ຮັບໜັງສືບອກໃຫ້ທ່ານຮູ້ຈັກວ່າໃບຄຳຮ້ອງຂອງທ່ານໄດ້ຖືກປະຕິເສດສຳລັບການຄຸ້ມກັນ Apple Health LTSS.

ມັນມີແຫລ່ງບໍຣິການແລະໂຄງການຫລາຍໆບ່ອນໃນຣາຄາຕ່ຳທີ່ທ່ານອາດຈະຄົ້ນຄວ້າເບິ່ງໄດ້.ໃຫ້ຕິດຕໍ່ກັບຫ້ອງການພົວພັນນຳການດຳຣົງຊີວິດຢູ່ໃນຊຸມນຸມຊົນທ້ອງຖິ່ນຂອງທ່ານ. ຈົ່ງເບິ່ງໜ້າ21ເພື່ອຣາຍຣະອຽດເພີ່ມເຕີມ.

ເງື່ອນໄຂຮັບເອົາຂອງທ່ານໃນສະວັດດີການ Apple Health LTSS ຈະຖືກກວດເບິ່ງຄືນຢ່າງໜ້ອຍປີນຶ່ງເທື່ອນຶ່ງແລະຫລັງຈາກການປ່ຽນແປງທີ່ຍິ່ງໃຫຍ່ຢູ່ໃນຖານະຂອງທ່ານ.

## ລາຍໄດ້ຂອງທ່ານເມື່ອເວລາທ່ານໄດ້ຮັບ Apple Health LTSS

ໃນເມື່ອທ່ານເລີ່ມຕົ້ນໄດ້ຮັບ Apple Health LTSS ແລ້ວ, ທ່ານອາດຕ້ອງໄດ້ຊ່ວຍອອກເງິນລາຍໄດ້ຂອງທ່ານບາງສ່ວນໃສ່ຄ່າໃຊ້ຈ່າຍການປິ່ນປົວຂອງທ່ານ. ອັນນີ້ຖືກເອີ້ນວ່າຄວາມຮັບຜິດຊອບຂອງລູກຄ້າ. ຈຳນວນເງິນຂອງຄວາມຮັບຜິດຊອບຂອງລູກຄ້າແມ່ນຂຶ້ນກັບການບໍລິການຕ່າງໆທີ່ທ່ານໄດ້ຮັບ, ຖານະການແຕ່ງງານຂອງທ່ານ, ແລະລາຍໄດ້ຂອງທ່ານ. ທ່ານຕ້ອງໄດ້ຈ່າຍຄ່າຄວາມຮັບຜິດຊອບຂອງລູກຄ້າເຫລົ່ານີ້ຖ້າຫາກວ່າມັນຖືກບົ່ງໃຫ້ຈ່າຍ.

ສ່ວນນຶ່ງຂອງລາຍໄດ້ທີ່ມີໄວ້ໃຫ້ຂອງທ່ານອາດນຳໄປໃຊ້ຈ່າຍເປັນສ່ວນແບ່ງໃຫ້ຜົວເມັຽ. ເງິນສ່ວນແບ່ງໃຫ້ຜົວເມັຽແມ່ນຖືກໃຊ້ເພື່ອດຶງເອົາລາຍໄດ້ຂອງຜົວເມັຽຂອງທ່ານຂຶ້ນເທົ່າກັບມາດຕະຖານຂອງລັດຖະບານກາງ. ການໄດ້ຮັບເງິນສ່ວນແບ່ງຂອງຜົວເມັຽນັ້ນແມ່ນຂຶ້ນຢູ່ກັບໂຄງການທີ່ທ່ານມີເງື່ອນໄຂໄດ້ຮັບ, ການບໍລິການຕ່າງໆທີ່ຕ້ອງການຂອງທ່ານ, ແລະຖານະຄວາມເປັນຢູ່ຂອງທ່ານນຳ. ບາງສ່ວນຂອງລາຍໄດ້ທີ່ມີຢູ່ຂອງທ່ານອາດເປັນສ່ວນລ້ຽງດູຍາດພີ່ນ້ອງທີ່ຫວັງເພິ່ງ.

ຖ້າທ່ານອາສັຍຢູ່ໃນເຮືອນ, ສ່ວນນຶ່ງຂອງລາຍໄດ້ທີ່ມີໄວ້ໃຫ້ຂອງທ່ານສາມາດຖືກເກັບໄວ້ເປັນສ່ວນຂອງການໃຊ້ສອຍໃນເຮືອນ, ເຊັ່ນວ່າຄ່າເຊົ່າເຮືອນ, ຄ່ານ້ຳຄ່າໄຟ, ຄ່າພາສີ ແລະຄ່າຄວາມຕ້ອງການຈຳເປັນສ່ວນຕົວ. ຖ້າຫາກວ່າທ່ານອາສັຍຢູ່ໃນສະຖານທີ່ເບິ່ງແຍງດູແລຢູ່ບ່ອນຢູ່ອາສັຍ, ທ່ານຈະເກັບລາຍໄດ້ບາງສ່ວນຂອງທ່ານໄວ້ສຳລັບຄວາມຕ້ອງການສ່ວນຕົວຂອງທ່ານ.



ຖ້າຫາກວ່າທ່ານຈະຢູ່ໃນສະຖານທີ່ເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງເປັນເວລາສັ້ນ, ທ່ານອາດສາມາດທີ່ຈະເກັບຮັກສາລາຍໄດ້ເພີ່ມເຕີມເພື່ອຊ່ວຍຮັກສາເຮືອນຂອງທ່ານສຳລັບການກັບຄືນເມືອເຮືອນຂອງທ່ານ. ອັນນີ້ເປັນທີ່ຮູ້ກັນວ່າ "ເງິນສ່ວນທີ່ຍົກເວັ້ນເພື່ອການບູຣະນະຮັກສາເຮືອນ { .ທ່ານໝໍຂອງທ່ານຕ້ອງພິສູດວ່າທ່ານຄ້າຍຄືຈະໄດ້ກັບເມືອຢູ່ເຮືອນຄືນ.

ຖ້າຫາກວ່າທ່ານອາສັຍຢູ່ໃນເຮືອນຄອບຄົວສຳລັບຜູ້ໃຫຍ່ຫລືສະຖານທີ່ອາສັຍຢູ່ທີ່ມີຄົນຊ່ວຍເຫລືອ, ທ່ານຈະຕ້ອງໄດ້ຮັບຜິດຊອບທີ່ຈະຈ່າຍຄ່າຫ້ອງແລະຄ່າກິນນອນເພີ້ມເຕີມໃສ່ຄວາມຮັບຜິດຊອບຂອງລູກຄ້າຂອງທ່ານ. ການປະສົມເຂົ້າກັນຂອງຄວາມຮັບຜິດຊອບຂອງລູກຄ້າແລະການກິນນອນໄດ້ຖືກເອີ້ນວ່າຄວາມຮັບຜິດຊອບທັງຫມົດຂອງທ່ານ.

Apple Health LTSS ບວກກັບຈຳນວນເງິນທີ່ທ່ານຈ່າຍໃນຄວາມຮັບຜິດຊອບຂອງລູກຄ້າແມ່ນການຈ່າຍເງິນເຕັມຈຳນວນສຳລັບການປິ່ນປົວຂອງທ່ານ.ເຮືອນຄອບຄົວສຳລັບຜູ້ໃຫຍ່ (AFHs) ຫລືສະຖານທີ່ອາສັຍຢູ່ທີ່ມີຄົນຊ່ວຍນຳ(ALFs) (ຈົ່ງເບິ່ງຫນ້າ19) ອາດຈະຮ້ອງຂໍເອົາເງິນເພີ້ມເຕີມຈາກທ່ານອີກສຳລັບສິ່ງທີ່ບໍ່ຖືກຄຸ້ມກັນຈ່າຍໃຫ້ໂດຍອັດຕຣາຂອງ Apple Health LTSS. ອັນນີ້ແມ່ນຕົວຢ່າງບາງຢ່າງ:

- ທ່ານມັກສິ່ງຂອງເບິ່ງແຍງດູແລຕົນເອງທີ່ມີຍີ່ຫໍ້ໂດ່ງດັງຫລາຍກວ່າແທນທີ່ວ່າຈະແມ່ນຍີ່ຫໍ້ທົ່ວໄປAFHຫລືALFເຮືອນຊື້ເອົາ. ທ່ານຈະຕ້ອງໄດ້ຈ່າຍເງິນຕື່ມອີກສຳລັບສິ່ງຂອງເບິ່ງແຍງດູແລຕົນເອງທີ່ມີຍີ່ຫໍ້ໂດ່ງດັງ.

AFHຫລືALF ບ່ອນທີ່ເກັບເອົາເງິນເພີ້ມເຕີມສຳລັບສິ່ງຂອງທີ່ບໍ່ຖືກຄຸ້ມກັນໃນອັດຕຣາຂອງApple Health LTSS (Medicaid) ຕ້ອງໄດ້ເອົາໃຫ້ທ່ານໃບໂກປີຂອງນະໂຍບາຍກ່ຽວກັບການຈ່າຍເງິນເພີ້ມເຕີມຂອງເຂົາເຈົ້າຊຶ່ງເວົ້າ
ເຖິງການຈ່າຍເງິນເພີ້ມເຕີມ. ກົດກຳນົດຂອງນະໂຍບາຍຂອງການຈ່າຍເງິນເພີ້ມເຕີມຈະຖືກກ່າວໃນ Washington Administrative Code (WAC) 388-105-0050 ແລະ 388-105-0055.

ກົດກຳນົດຂອງນະໂຍບາຍການຈ່າຍເງິນເພີ້ມເຕີມໄດ້ຖືກກ່າວໄວ້ຢູ່ໃນກົດຫມາຍ Washington Administrative Code (WAC) 388-105-0050 ແລະ 388-105-0055.

ຈົ່ງຕິດຕໍ່ໄປຫາຫນ່ວຍ Residental Care Services (RCS) Complaint Resolution Unit (CRU) ໄດ້ທີ່ເລກ 1-800-562-6078 ຖ້າຫາກວ່າຫລັງຈາກການກວດເບິ່ງຄືນນະໂຍບາຍກ່ຽວກັບການຈ່າຍເງິນເພີ້ມເຕີມແລ້ວທ່ານມີຄວາມຂ້ອງໃຈຫລືຄຳຮ້ອງທຸກແນວໃດ.

## ເງິນທຶນສ່ວນຕົວຂອງຜູ້ອາສັຍຢູ່ໄດ້ຖືກກຳເອົາໄວ້ໂດຍສະຖາບັນການປິ່ນປົວ

ຖ້າຫາກວ່າສະຖານທີ່ເບິ່ງແຍງດູແລຢູ່ບ່ອນພັກເຊົາກັກເອົາໄວ້ເງິນທຶນສ່ວນຕົວແນວໃດແນວນຶ່ງຂອງຜູ້ອາສັຍຢູ່ຜູ້ທີ່ໄດ້ເສັຽຊີວິດແລ້ວ, ເງິນຕ້ອງຖືກສົ່ງໃຫ້ພາຍໃນ 45 ວັນໃຫ້ແກ່:

- ບຸກຄົນຫລືສິດອຳນາດພິນັຍກັມທີ່ປົກຄອງມູນມໍຣະດົກຂອງຜູ້ອາສັຍຢູ່.

- ຫລື -

- ຫ້ອງການ Office of Financial Recovery. ຫ້ອງການແຫ່ງນີ້ຈະປ່ອຍເງິນອອກເພື່ອຈະຈ່າຍຄ່າຝັງສົບ.

ເງິນທຶນສ່ວນຕົວຂອງຜູ້ອາສັຍຢູ່ໄດ້ຖືກກຳເອົາໄວ້ໂດຍສະຖາບັນການປິ່ນປົວ

ຖ້າຫາກວ່າສະຖານທີ່ເບິ່ງແຍງດູແລຢູ່ບ່ອນພັກເຊົາກັກເອົາໄວ້ເງິນທຶນສ່ວນຕົວແນວໃດແນວນຶ່ງຂອງຜູ້ອາສັຍຢູ່ຜູ້ທີ່ໄດ້ເສັຽຊີວິດແລ້ວ, ເງິນຕ້ອງຖືກສົ່ງໃຫ້ພາຍໃນ 45 ວັນໃຫ້ແກ່:

- ບຸກຄົນຫລືສິດອຳນາດພິນັຍກັມທີ່ປົກຄອງມູນມໍຣະດົກຂອງຜູ້ອາສັຍຢູ່.
  - ຫລື -
- ຫ້ອງການOffice of Financial Recovery. ຫ້ອງການແຫ່ງນີ້ຈະປ່ອຍເງິນອອກເພື່ອຈະຈ່າຍຄ່າຝັງສົບ.

## ການກອບກູ້ເອົາເງິນທຶນຄືນຈາກມູນມໍຣະດົກຂອງທ່ານ

ຕາມກົດໝາຍແລ້ວ, ຣັດວໍຊິງຕັນອາດກອບກູ້ເອົາເງິນຄືນ (ຖືກຈ່າຍຄືນ) ເງິນຈ່າຍອອກໄປທີ່ຣັດວໍຊິງຕັນໄດ້ຈ່າຍສຳລັບການປິ່ນປົວ Apple Health LTSSທຸກໆຢ່າງທີ່ທ່ານໄດ້ຮັບກ່ອນການເສັຽຊີວິດຂອງທ່ານ. ການຈ່າຍເງິນຈະຖືກເອົາອອກຈາກມູນມໍຣະດົກຂອງທ່ານ (ຊັບສິນທີ່ທ່ານໄດ້ເປັນເຈົ້າຂອງໃນເວລາຂອງການເສັຽຊີວິດ) . ອັນນີ້ຖືກເອີ້ນວ່າການກອບກູ້ເອົາຈາກມູນມໍຣະດົກ,ລວມທັງຊະນິດຂອງການບໍຣິການທີ່ຕ້ອງຖືກເກັບເອົາຄືນຈາກມູນມໍຣະດົກ,ສາມາດຖືກພົບເຫັນຢູ່ໃນເອກສານ DSHS 14-454, "Estate



■ ມັນມີການບໍລິການຫລາຍໆຢ່າງ, ຫລາຍໂຄງການ, ແລະແຫລ່ງຊ່ວຍເຫລືອຕ່າງໆທີ່ມີໃຫ້ເພື່ອຊ່ວຍທ່ານໃຫ້ສືບຕໍ່ທີ່ຈະອາສັຍຢູ່ເຮືອນຕໍ່ໄປ.

Recovery Repaying the State for Medical and Long-Term Services and Supports" ໄດ້ຢູ່ທີ່: www.dshs.wa.gov/office-of-the-secretary/forms?field_number_value=14-454&amp%3Btitle=&amp%3B=Apply ຫລືການກອບກູ້ເອົາຈາກມູນມໍຣະດົກສໍາລັບການບໍຣິການປິ່ນປົວພະຍາບານທີ່ຖືກຈ່າຍໃຫ້ໂດຍຣັດຢູ່ທີ່ www.washingtonlawhelp.org/resource/estate-recovery-for-medical-services-paid-for?ref=EhazT. ທ່ານຍັງຈະອ່ານໄດ້ອີກຄືກັນກົດຫມາຍ Revised Code of Washington (RCW) chapter 41.05A ແລະ chapter 43.20B ແລະ Washington Administrative Code (WAC) chapter 182-527.

ຣັດວໍຊິງຕັນຈະກອບກູ້ເອົາຄ່າໃຊ້ຈ່າຍຂອງການປິ່ນປົວຣະຍະຍາວແລະການອູ້ມຊູທີ່ຖືກອອກທຶນໃຫ້ໂດຍຣັດຖະບານກາງຫລືຣັດຍົກເວັ້ນເສັຽແຕ່:

- ພະແນກປ້ອງກັນຜູ້ໃຫຍ່ (APS)
- ເງິນຈ່າຍຄວາມປອດພັຍເພີ້ມເຕີມທີ່ຖືກອະນຸມັດໂດຍ Developmental Disability Administration (DDA)

- ການບໍລິການຂອງໂຄງການ Offender reentry community safety
- ການບໍລິການອາສາສະມັກ
- ເງິນຈ່າຍຮ່ວມແລະຄ່າທຳນຽມທີ່ກ່ຽວພັນນຳ Medicare ພາຍໃຕ້ໂຄງການ Medicare Savings Program ຂອງຣັດຖະບານກາງ
- ຄ່າປິ່ນປົວພະຍາບານທີ່ Health Care Authority ຈ່າຍໃຫ້ຖ້າຫາກວ່າທ່ານບໍ່ໄດ້ຮັບການບໍຣິການແລະການອູ້ມຊູສຳລັບການປິ່ນປົວຣະຍະຍາວອີກ
- ໂຄງການ Medicaid Alternative Care (MAC) (TSOA)
- ໂຄງການ Tailored Supports for Older Adults

ການກອບກູ້ເອົາຈາກມູນມໍຣະດົກພຽງແຕ່ໃຊ້ໄດ້ກັບຊັບສິນຕ່າງໆທີ່ທ່ານເປັນເຈົ້າຂອງຫລືມີຜົນປະໂຍດນຳໃນເວລາຂອງການເສັຽຊີວິດ. ທາງຣັດຈະບໍ່ເລີ້ມຕົ້ນຄວາມພະຍາຍາມທີ່ຈະກອບກູ້ຈົນກວ່າພາຍຫລັງການເສັຽຊີວິດຂອງທ່ານ;ໃນຊ່ວງການມີຊີວິດຢູ່ຂອງຜົວເມັຽທີ່ຍັງມີຊີວິດຢູ່, ຫລືໃນຊ່ວງເວລາທີ່ລູກຜູ້ທີ່ຍັງມີຊີວິດຢູ່ຂອງທ່ານຫາກມີອາຍຸຕ່ຳກວ່າ21ປີ, ຕາບອດຫລືເສັຽອົງຄະ. ເງື່ອນໄຂຂອງຄວາມຫຍຸ້ງຍາກລຳບາກໃນການປົກປ້ອງມູນມໍຣະດົກຂອງຜູ້ເພິ່ງພາຫລືຂາຄູ່ຢູ່ນຳກັນທີ່ຖືກລິງທະບຽນອາດນຳມາໃຊ້.

ທີ່ດິນບາງບ່ອນທີ່ເປັນເຈົ້າຂອງໂດຍຄົນອະເມຣິກັນອິນດຽນຫລືຄົນອາລາສກາດັ້ງເດີມອາດຈະຖືກຍົກເວັ້ນຈາກການກອບກູ້ເອົາຈາກມູນມໍຣະດົກ.

ການຍົກເວັ້ນຫລາຍຢ່າງໄດ້ມີມາເປັນຕັ້ງຫລາຍປີແລ້ວ. ກົມ້ຳສຫສຈະໃຊ້ກົດໝາຍການກອບກູ້ເອົາຈາກມູນມໍຣະດົກບໍ່ວ່າຈະແມ່ນກົດຫມາຍອັນໃດທີ່ມີຢູ່ໃນວັນທີທີ່ການຊ່ວຍເຫລືອໄດ້ຖືກຮັບເອົາ.

### ການຜູກມັດກັມມະສິດໃສ່ຊັບສິນທີ່ດິນເຮືອນຊານ

DSHS ຈະຍື່ນການຜູກມັດກັມມະສິດໃສ່ຊັບສິນທີ່ດິນເຮືອນຊານເພື່ອຈະຈ່າຍຄືນຄ່າການເບິ່ງແຍງດູແລຣະຍະຍາວແລະການບໍຣິການປິ່ນປົວຕ່າງໆທີ່ທ່ານໄດ້ຮັບຖ້າຫາກວ່າ:

- ທ່ານໄດ້ພັກອາສັຍຢູ່ຖາວອນໃນເຮືອນເບິ່ງແຍງດູແລຜູ້ເຖົ້າຫລືສະຖານທີ່ພະຍາບານບ່ອນອື່ນ.
- ຊັບສິນທີ່ດິນເຮືອນຊານເປັນສ່ວນນຶ່ງຂອງມູນມໍຣະດົກຂອງທ່ານແລະທ່ານໄດ້ເສັຽຊີວິດລົງໄປແລ້ວ.

ກ່ອນການຍື່ນການຜູກມັດກັມມະສິດໃສ່ຊັບສິນທີ່ດິນເຮືອນຊານໃຫ້ເປັນສ່ວນນຶ່ງຂອງການກອບກູ້ເອົາມູນມໍຣະດົກ, ້ຳສຫສຈະໃຫ້ຄຳແຈ້ງການແລະໃຫ້ໂອກາດສຳລັບການຟັງເຣື່ອງໃຫ້ແກ່ຜູ້ຕາງຫນ້າສ່ວນຕົວຂອງມູນມໍຣະດົກຂອງທ່ານຫລືເຈົ້າຂອງຊັບສິນທີ່ດິນອື່ນໆທີ່ຖືກສ້າງຕັ້ງຖານະເປັນເຈົ້າຂອງຊັບສິນ.

ຖ້າຫາກວ່າທ່ານອາສັຍຢູ່ໃນເຮືອນເບິ່ງແຍງດູແລຜູ້ເຖົ້າຫລືສະຖານທີ່ພະຍາບານບ່ອນອື່ນແລະໄດ້ຮັບ Medicaid, DSHS ອາດຈະກອບກູ້ເອົາຄ່າໃຊ້ຈ່າຍຄືນຈາກມູນມໍຣະດົກຂອງທ່ານຫລືການຂາຍຊັບສິນທີ່ດິນເຮືອນຊານຂອງທ່ານ. ຖ້າຫາກວ່າທ່ານກັບຄືນມາເຮືອນ, ການຜູກມັດກັມມະສິດຈະຖືກປົດປ່ອຍອອກ. ການຜູກມັດກັມມະສິດຈະບໍ່ຖືກຍື່ນໃສ່ເຮືອນຂອງທ່ານຖ້າຫາກວ່າ:

- ຜົວເມັຽ, ຂາຄູ່ຢູ່ນຳກັນ, ຫລືລູກທີ່ບໍ່ພົ້ນກະສຽນ, ລູກຜູ້ຕາບອດ, ຫລືເປັນພິການຂອງທ່ານຫາກອາສັຍຢູ່ໃນເຮືອນ.
- ອ້າຍເອື້ອຍນ້ອງຄືງໆມີຜົນກຳໄຣສະເໝີພາບກັນໃນເຮືອນນັ້ນ, ປັດຈຸບັນກໍ່ຍັງອາສັຍຢູ່ໃນເຮືອນນັ້ນ, ແລະໄດ້ອາສັຍຢູ່ທີ່ນັ້ນຢ່າງໜ້ອຍເປັນເວລາປີໜຶ່ງໂດຍທັນທີກ່ອນເວລາທີ່ທ່ານຍ້າຍເຂົ້າຢູ່ສະຖານທີ່ປິ່ນປົວ.

ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບເຣື່ອງການກອບກູ້ເອົາຈາກມໍຣະດົກ, ຈົ່ງປຶກສາທະນາຍຜູ້ມີຄວາມຊຳນານກ່ຽວກັບກົດໝາຍApple Health LTSS. ທ່ານຍັງສາມາດຕິດຕໍ່ຫາໄດ້ອີກຄືກັນ

Coordinated Legal Education, Advice, and Referral (CLEAR) ເລກໂທຟຣີໄດ້ທີ່ 1-888-201-1014.

CLEAR ເປັນໂຄງການອັນນຶ່ງຂອງ Northwest Justice Project (NJP) –ອົງການທົ່ວຣັດທີ່ບໍ່ຫວັງຜົນກຳໄຣຊຶ່ງໃຫ້ການບໍຣິການຟຣີດ້ານກົດຫມາຍພົລເມືອງໃຫ້ແກ່ພົລເມືອງຂອງຣັດວໍຊິງຕັນທີ່ມີຣາຍໄດ້ຕ່ຳ.ເຂົາເຈົ້າມີແວບໄຊທ໌ເປັນພາສາອັງກິດ,ສະແປນິຊ,ຈີນ,ເກົາຫລີ,ຕາກາລອກ,ວຽດນາມ,ຣັດເຊັຽ,ແລະໂຊມາລີໄດ້ທີ່ www.nwjustice.org.

# ທາງເລືອກເອົາການບໍຣິການສຳລັບບຸກຄົນທີ່ໄດ້ຮັບApple Health LTSS

ມີການບໍຣິການຫລາຍໆຢ່າງ, ຫລາຍໂຄງການ, ແລະແຫລ່ງຊ່ວຍເຫລືອຕ່າງໆທີ່ມີໃຫ້ເພື່ອຊ່ວຍທ່ານໃຫ້ສືບຕໍ່ທີ່ຈະອາສັຍຢູ່ເຮືອນຕໍ່ໄປ.

ພະນັກງານສັງຄົມ,ບາງເທື່ອຖືກເອີ້ນວ່າເປັນຜູ້ຈັດການເອກສານ, ຈະທົບທວນຄືນເບິ່ງທາງເລືອກຂອງການເບິ່ງແຍງດູແລຂອງທ່ານກັບທ່ານຫລັງຈາກການປະເມີນຜົນ CARE ຂອງທ່ານ (ໃຫ້ເບິ່ງໜ້າ 5).

ໜ້າຕໍ່ລົງໄປນີ້ແມ່ນສະລູບຄວາມຂອງທາງເລືອກຂອງການບໍຣິການຫລາຍໆທາງທີ່ທ່ານຈະເວົ້າລົມກັນໄດ້. ພະນັກງານສັງຄົມຂອງທ່ານຈະມີຣາຍລະອຽດເພີ້ມເຕີມແລະຈະຕອບຄຳຖາມຕ່າງໆທີ່ທ່ານອາດຈະມີຢູ່ກ່ຽວກັບທາງເລືອກເອົາການບໍຣິການທີ່ທ່ານອາດຈະມີເງື່ອນໄຂໄດ້ຮັບ,ແລະເວົ້ານຳທ່ານວ່າແມ່ນຫຍັງທີ່ທ່ານຄິດວ່າຈະເຮັດໄດ້ດີທີ່ສຸດສຳລັບທ່ານ.

### ການບໍຣິການແລະໂຄງການທີ່ຊ່ວຍທ່ານໃຫ້ອາສັຍຢູ່ໃນເຮືອນ

ຫລາຍໆຄົນສາມາດສືບຕໍ່ທີ່ຈະອາສັຍຢູ່ເຮືອນຖ້າຫາກວ່າເຂົາເຈົ້າມີຄວາມຊ່ວຍເຫລືອນຳໜ້າທີ່ເຊັ່ນວ່າການຈັດແຈງອາຫານ, ການບົວຣະບັດຕົນເອງ, ການຂົນສົ່ງໄປມາ, ຫລືການເຮັດວຽກບ້ານ.ມັນມີການບໍຣິການ, ໂຄງການ, ແລະແຫລ່ງຊ່ວຍເຫລືອຫລາຍໆຢ່າງທີ່ມີໄວ້ໃຫ້ເພື່ອຊ່ວຍທ່ານໃນເຣື່ອງເຫລົ່ານີ້.

ສ່ວນຫລາຍແລ້ວ, ຄອບຄົວແລະໝູ່ເພື່ອນໄດ້ຊ່ວຍເຫລືອທ່ານຢູ່ແລ້ວແລະຈະດຳເນີນເຮັດຕໍ່ໄປ. ພະນັກງານສັງຄົມຂອງທ່ານຈະເຮັດວຽກນຳທ່ານແລະຈະອອກແບບແຜນການເບິ່ງແຍງດູແລເພື່ອຈະຕື່ມໃສ່ບ່ອນວ່າງທີ່ຕ້ອງມີການຊ່ວຍເຫລືອເພີ້ມເຕີມ.

### ໂຄງການ Medicaid Alternative Care (MAC)

ຖ້າຫາກວ່າທ່ານມີອາຍຸ55ປີຫລືແກ່ກວ່າ, ມີເງື່ອນໄຂໄດ້ຮັບອີງຕາມການເງິນສຳລັບການບໍຣິການພະຍາບານຂອງ Apple Health LTSS, ມີຜູ້ເບິ່ງແຍງດູແລຜູ້ເປັນພີ່ນ້ອງ (ຫລືໝູ່ເພື່ອນ) ຜູ້ທີ່ບໍ່ຖືກຈ່າຍເງິນໃຫ້ຜູ້ທີ່ຊ່ວຍເຫລືອທ່ານນຳພາລະໜ້າທີ່ການເບິ່ງແຍງດູແລສ່ວນຕົວບາງຢ່າງ,ແລະທ່ານຢາກຈະອາສັຍຢູ່ໃນເຮືອນ, Medicaid Alternative Care (MAC) ແມ່ນທາງເລືອກສຳລັບທ່ານ. MAC ແມ່ນ Apple Health LTSS ທີ່ຖືກເອົາໃຫ້ຜ່ານໂຄງການ Medicaid Transformation Project Demonstration ທີ່ຈະອູ້ມຊູຜູ້ເບິ່ງແຍງດູແລຜູ້ທີ່ບໍ່ຖືກຈ່າຍເງິນໃຫ້ຂອງທ່ານດ້ວຍການບໍຣິການແລະການອູ້ມຊູເພື່ອຈະຊ່ວຍເຂົາເຈົ້າໃຫ້ປະສົບຜົນສຳເຣັດໃນບົດບາດຂອງການເປັນຜູ້ໃຫ້ການເບິ່ງແຍງດູແລຂອງເຂົາເຈົ້າ. ການບໍຣິການ MAC ຈະໃຊ້ແທນ Apple Health LTSS ອື່ນໆທີ່ຖືກກ່າວຢູ່ໃນເອກສານຕີພິມອັນນີ້.

ການບໍລິການທີ່ຖືກເອົາໃຫ້ພາຍໃຕ້ MAC ຈະບໍ່ຖືກກ່ຽວນຳການກອບກູ້ເອົາມູນມໍຣະດົກແລະ ຄວາມຮັບຜິດຊອບຂອງລູກຄ້າ (ເງິນຈ່າຍຮ່ວມ) ຕາມທີ່ຖືກບັນຣະຍາຍຢູ່ໜ້າ6-10ຢູ່ໃນປື້ມຫົວນີ້.

MAC ເອົາໃຫ້ທາງເລືອກຂອງການບໍລິການກວ້າງຂວາງຫລາຍໆທາງສຳລັບຜູ້ໃຫ້ການເບິ່ງແຍງດູແລພາຍ ໃນຂອບເຂດຂອງໂຄງການ:

- ຣາຍຣະອຽດກ່ຽວກັບການໃຫ້ການເບິ່ງແຍງດູແລ, ແຫລ່ງຊ່ວຍເຫລືອຢູ່ໃນຊຸມນຸມຊົນຂອງທ່ານ, ການບໍລິ ການທີ່ມີໄວ້ໃຫ້ແລະແນວອື່ນໆ.
- ການປຶກສາໂດຍອີງຕາມຫລັກຖານ.
- ການອົບຮົມເປັນລຸ່ມແລະການໃຫ້ຄຳປຶກສາ.
- ອຸບປະກອນພະຍາບານທົ່ວໄປ
- ໂອກາດຈະໄດ້ຮັບສຳລັບທາງເລືອກການເບິ່ງແຍງດູແລຊົ່ວຊາວຫລືວຽກບ້ານຫລືການອົບຮົມນຳວຽກເລັກນ້ອຍ.
- ໂອກາດສຳລັບການຝຶກອົບຮົມ.

ເພື່ອຣາຍຣະອຽດກ່ຽວກັບໂຄງການ MAC, ສອບຖາມນຳພະນັກງານສັງຄົມຂອງທ່ານ,ຕິດຕໍ່ຫາຫ້ອງການ ທ້ອງຖິ່ນ Community Living Connections ຂອງທ່ານໄດ້ທີ່ www.waclc.org/consite/index.php ຫລືແວ່ບ໌ໄຊທ໌ www.dshs.wa.gov/altsa/stakeholders/medicaid-transformation-demonstration.

## ຄວາມຊ່ວຍເຫລືອນຳການເບິ່ງແຍງດູແລສ່ວນຕົວ

ການຕ້ອງການຄວາມຊ່ວຍເຫລືອນຳການເບິ່ງແຍງດູແລສ່ວນຕົວຫມາຍຄວາມວ່າທ່ານຕ້ອງການຄວາມ ຊ່ວຍເຫລືອນຳສິ່ງຕ່າງໆເຊັ່ນວ່າການອາບນ້ຳ, ການນຸ່ງເຄື່ອງ, ຫລືການໃຊ້ຫ້ອງນ້ຳ. ໂຄງການເຊັ່ນວ່າ Community First Choice (CFC) ຫລື Medicaid Personal Care (MPC) ຈະຈ່າຍເງິນໃຫ້ສຳລັບການເບິ່ງແຍງດູແລສ່ວນຕົວ.

ທ່ານສາມາດຈ້າງເອົາຜູ້ໃຫ້ການເບິ່ງແຍງດູແລເພື່ອຈະຊ່ວຍເຫລືອທ່ານນຳການເບິ່ງແຍງດູແລສ່ວນຕົວຖ້າຫາກ ວ່າທ່ານສອດຄ່ອງນຳກົດກຳນົດຂອງເງື່ອນໄຂໄດ້ຮັບ. ໂດຍຂຶ້ນກັບຣາຍໄດ້ຂອງທ່ານ, DSHSຈະຈ່າຍເງິນໃຫ້ສຳ ລັບທັງຫມົດຫລືສ່ວນນຶ່ງຂອງການບໍລິການຂອງຜູ້ເບິ່ງ ແຍງດູແລເຫລົ່ານີ້ (ຈົ່ງເບິ່ງຫນ້າ6ເພື່ອຣາຍລະອຽດ ເພີ້ມເຕີມ).

ມັນເປັນທາງເລືອກຂອງທ່ານວ່າແມ່ນ ໃຜຈະເປັນຜູ້ເບິ່ງແຍງດູແລຂອງທ່ານ.



ມັນເປັນທາງເລືອກຂອງທ່ານວ່າແມ່ນໃຜຈະເປັນຜູ້ເບິ່ງແຍງດູແລຂອງທ່ານ. ທ່ານສາມາດຊອກຫາຜູ້ເບິ່ງແຍງດູແລໂດຍຕົນເອງຫລືຜ່ານ, ຊຶ່ງຖືກເອີ້ນວ່າ Consumer Direct Care Network Washington (CDWA), ຜູ້ໃຫ້ການບໍລິການສ່ວນບຸກຄົນ (IP), ຫລື ຊອກຫາຄົນນຶ່ງໂດຍຜ່ານຫ້ອງການເບິ່ງແຍງດູແລຢູ່ຕາມເຮືອນ ຫລື ການປະສົມກັນທັງສອງຢ່າງ.ຖ້າຫາກວ່າທ່ານຕ້ອງການຢາກໃຫ້ສະມາຊິກຄອບຄົວເປັນຜູ້ເບິ່ງແຍງດູແລຂອງທ່ານ,ເຂົາເຈົ້າສາມາດຖືກຈ້າງໃຫ້ເປັນໄດ້ແຕ່ IP ເທົ່ານັ້ນ, ຫລືເປັນພະນັກງານຫ້ອງການເບິ່ງແຍງດູແລຢູ່ເຮືອນເມື່ອເວລາລູກຄ້າໄດ້ຈົດຊື່ເຂົ້າເປັນສະມາຊິກຂອງຊຸມເຜົ່າອິນດຽນຊຶ່ງຖືກຮັບຮູ້ໂດຍຣັດຖະບານກາງຫລືອາສັຍຢູ່ໃນຄອບຄົວຂອງສະມາຊິກທີ່ໄດ້ຈົດຊື່ (RCW 74. 39A.326(1)(b).ຂໍ້ຈຳກັດຕ້ອງສອດຄ່ອງນຳກົດເກນຂອງຣັດແລະຣັດຖະບານກາງບາງຢ່າງແລະ CDWA ຈະຊ່ວຍເຫລືອທ່ານພິຈາຣະນາເບິ່ງວ່າສະມາຊິກຄອບຄົວຫລືໝູ່ເພື່ອນຂອງທ່ານສາມາດມີສິດທີ່ຈະກາຍເປັນ IP.

ມັນມີທາງເລືອກກ່ຽວກັບການເບິ່ງແຍງດູແລຢູ່ໃນເຮືອນຫລາຍໆທາງທີ່ມີໄວ້ໃຫ້ຖ້າຫາກວ່າທ່ານຕ້ອງການການເບິ່ງແຍງດູແລສ່ວນຕົວ.

## ຜູ້ໃຫ້ການບໍລິການສ່ວນບຸກຄົນ (IP)

ໂດຍມີ IP ຄົນນຶ່ງ, ທ່ານຈະຕັດສິນໃຈວ່າແມ່ນໃຜຈະມາເຮືອນຂອງທ່ານແລະ
ເອົາການເບິ່ງແຍງດູແລສ່ວນຕົວໃຫ້
ທ່ານ.ທ່ານຈະຕັ້ງຕາຕະລາງເວລາການເຮັດວຽກຂອງຜູ້ໃຫ້ການເບິ່ງແຍງດູແລຂອງທ່ານພາຍໃນຂອບເຂດອາທິດເຮັດວຽກຂອງເຂົາເຈົ້າ (ຕາມປົກກະຕິແລ້ວ40 ຊົ່ວໂມງຕໍ່ອາທິດ) ແລະບົ່ງບອກວ່າຈະເຮັດພາລະກິດແນວໃດແລະໃນເວລາໃດ. ຈຳນວນຊົ່ວໂມງທີ່ທ່ານຈະໃຊ້ເພື່ອຈະຈ້າງເອົາຜູ້ເບິ່ງແຍງດູແລຈະຖືກບົ່ງບອກໂດຍຜ່ານການປະເມີນຜົນCAREຂອງທ່ານ.

ທ່ານເປັນນາຍຈ້າງຄວບຄຸມເບິ່ງນຳ IP ຄົນນັ້ນ.ອັນນີ້ຫມາຍຄວາມວ່າທ່ານເລືອກເອົາ, ຈ້າງເອົາ, ແລະກຳກັບຄວບຄຸມຜູ້ໃຫ້ການເບິ່ງແຍງດູແລ. ທ່ານຍັງຈະຕ້ອງໄດ້ຊອກຫາຜູ້ໃຫ້ການເບິ່ງແຍງດູແລສຳລອງອີກເມື່ອເວລາIP ປົກກະຕິຂອງທ່ານມີມື້ພັກ. ເພື່ອຈະຊອກຫາຜູ້ໃຫ້ການຄົນນຶ່ງ, ທ່ານສາມາດ:

- ເລືອກເອົາໝູ່ຄູ່ຫລືສະມາຊິກຄອບຄົວ (ໂດຍມີຂໍ້ຍົກເວັ້ນບາງຢ່າງ) .
- ໃຊ້ Consumer Direct Care Network Washington (ເບິ່ງຢູ່ຫນ້າ 14).
- ໃຊ້ Carina (ເບິ່ງຢູ່ຫນ້າ 14).
- ຊອກຫາຜູ້ໃດຜູ້ນຶ່ງໃນຊຸມນຸມຊົນຂອງທ່ານ.

CDWA ຈະເຮັດການກວດເບິ່ງເບື້ອງຫລັງໂດຍຜ່ານ DSHS ໃສ່ທຸກໆຄົນທີ່ທ່ານເລືອກເອົາ.

## ຫ້ອງການເບິ່ງແຍງດູແລຢູ່ຕາມເຮືອນ

ທາງເລືອກທາງອື່ນຂອງທ່ານແມ່ນເພື່ອຈະເລືອກເອົາຫ້ອງການເບິ່ງແຍງດູແລຢູ່ຕາມເຮືອນທີ່ມີໃບອະນຸຍາດແລະມີສັນຍາທີ່ຈະເອົາຜູ້ເບິ່ງແຍງດູແລໃຫ້.ອົງການເບິ່ງແຍງດູແລຢູ່ຕາມເຮືອນເກນເອົາ, ກວດເບິ່ງເບື້ອງຫລັງໂດຍຜ່ານກົມ DSHS,ຈ້າງເອົາ, ແລະກຳກັບຄວບຄຸມຄົນງານຂອງເຂົາເຈົ້າ,ແລະໃຫ້ແນ່ໃຈວ່າຜູ້ໃຫ້ການເບິ່ງແຍງດູແລໄດ້ຮັບການຝຶກອົບຮົມທີ່ຕ້ອງການ. ຫ້ອງການເບິ່ງແຍງດູແລຢູ່ຕາມເຮືອນຈະເອົາຜູ້ເບິ່ງແຍງດູແລສຳລອງໃຫ້ທ່ານຖ້າຫາກວ່າຜູ້ເບິ່ງແຍງດູແລທີ່ຖືກນັດໃຫ້ມາບໍ່ສາມາດມາເຮັດວຽກໄດ້.

ຜູ້ຄວບຄຸມງານຂອງຫ້ອງການເບິ່ງແຍງດູແລຢູ່ຕາມເຮືອນຈະເຮັດວຽກນຳທ່ານເພື່ອຈະຊອກຫາຜູ້ເບິ່ງແຍງດູແລທີ່ຕອບສະນອງຄວາມຕ້ອງການຂອງທ່ານໄດ້ດີທີ່ສຸດ. ເຖິງຢ່າງໃດກໍຕາມ, ທ່ານມີການຄວບຄຸມໄດ້ຫນ້ອຍກວ່າວ່າແມ່ນໃຜຖືກເລືອກເອົາໃນການປຽບທຽບໃສ່ກັນໃນການຈ້າງເອົາ IP ແລະທ່ານຈະບໍ່ໄດ້ຜູ້ເບິ່ງແຍງດູແລຄົນດຽວກັນມາເຮືອນຂອງທ່ານໃນແຕ່ລະເທື່ອ. ດ້ວຍການຍົກເວັ້ນບໍ່ພໍເທົ່າໃດຢ່າງ,ຫ້ອງການເບິ່ງແຍງດູແລຢູ່ຕາມເຮືອນບໍ່ຖືກອະນຸຍາດໃຫ້ຈ້າງເອົາສະມາຊິກຄອບຄົວຂອງທ່ານຄົນໃດຄົນນຶ່ງເພື່ອຈະໃຫ້ການເບິ່ງແຍງດູແລຂອງທ່ານ.

### ການອູ້ມຊູສຳລັບຜູ້ເບິ່ງແຍງດູແລທີ່ເປັນສະມາຊິກຄອບຄົວທີ່ບໍ່ຖືກຈ່າຍເງິນໃຫ້

ທາງເລືອກສຳລັບການບໍຣິການອີກທາງນຶ່ງແມ່ນທີ່ຈະອູ້ມຊູຜູ້ເບິ່ງແຍງດູແລຕົ້ນຕໍທີ່ບໍ່ຖືກຈ່າຍເງິນໃຫ້ (ເຊັ່ນວ່າ ຜົວເມັຽຫລືລູກຜູ້ໃຫຍ່ຂອງທ່ານ) .Medicaid Alternative Care (MAC) ແລະ Tailored Supports for Older Adults (TSOA) ແມ່ນມີໄວ້ໃຫ້ແທນທີ່ວ່າຈະໄດ້ຮັບການເບິ່ງແຍງດູແລສ່ວນຕົວຜ່ານ Community First Choice (CFC) ຫລື Medicaid Personal Care (MPC) ຖ້າຫາກວ່າທ່ານມີອາຍຸ55ປີຫລືແກ່ກວ່າ. ຜູ້ເບິ່ງແຍງດູແລຜູ້ທີ່ບໍ່ຖືກຈ່າຍເງິນໃຫ້ຂອງທ່ານຈະມີເງື່ອນໄຂໄດ້ຮັບການຝຶກອົບຣົມແລະການສຶກສາ,ອຸບປະກອນ/ເຄື່ອງໃຊ້ພິເສດສະເພາະ, ການອູ້ມຊູຮັກສາສຸຂະພາບ, ແລະການເບິ່ງແຍງດູແລແທນຊົ່ວຄາວ. ການກອບກູ້ເອົາມູນມໍຣະດົກແລະຄວາມຮັບຜິດຊອບຂອງລູກຄ້າຈະບໍ່ກ່ຽວນຳໂຄງການ MAC ຫລື TSOA. ຫ້ອງການ HCS ທ້ອງຖິ່ນຂອງທ່ານຍັງຈະສາມາດເອົາລາຍລະອຽດເພີ້ມເຕີມໃຫ້ໄດ້ກ່ຽວກັບໂຄງການເຫລົ່ານີ້.

## ການຊອກຫາຜູ້ບໍຣິການສ່ວນບຸກຄົນ

ຜູ້ບໍຣິການສ່ວນບຸກຄົນ (IPs) ທຸກໆຄົນຢູ່ໃນຣັດວໍຊິງຕັນເປັນພະນັກງານຂອງ Consumer Direct Care Network Washington (CDWA). ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອໃນການຊອກຫາ IP ຂອງທ່ານຫລືມີຄຳຖາມແນວໃດ,ກະຣຸນາໂທຫາ CDWA ໄດ້ທີ່ເລກ 1-866-214-9899 ຫລືແວ່ປ່ຽມແວບໄຊທ໌ຂອງເຂົາເຈົ້າໄດ້ທີ່ www.consumerdirectwa.com.

ຣະບົບປຽບທຽບຟຣີ,ອີງໃສ່ແວບ໌ຊຶ່ງຖືກເອີ້ນວ່າແມ່ນເຄື່ອງມືອອນລາຍນ໌ທີ່ຖືກອອກແບບມາເພື່ອຈະຊ່ວຍເຫລືອຜູ້ຮັບເອົາການບໍຣິການແລະ IPs ເພື່ອຈະຊອກຫາກັນແລະກັນ.ເພື່ອຈະປ່ຽມແວບໄຊທ໌,ໄປທີ່ https://carina.org/HomeCare-Options. ຖ້າຫາກວ່າທ່ານມີຄວາມຫຍຸ້ງຍາກແນວໃດ,ທ່ານສາມາດໂທຫາ Carina ໄດ້ທີ່ 1-855-796-0605. Consumer Direct Care Network Washington (CDWA) ຍັງສາມາດຊ່ວຍເຫລືອທ່ານຕິດປະກາດ"ວຽກງານ{ຢູ່ໃນ Carina ເພື່ອຈະບອກົ່ຳຊທີ່ອາດເປັນໄປໄດ້ສິ່ງທີ່ທ່ານຕ້ອງການ.

## ການຊ່ວຍເຫລືອນຳຄວາມຕ້ອງການດ້ານການປິ່ນປົວສຸຂະພາບ

ໃນຜ່ານມາ, ຫລາຍໆຄົນຍ້າຍໄປຢູ່ເຮືອນເບິ່ງແຍງຜູ້ເຖົ້າຖ້າຫາກວ່າການເບິ່ງແຍງດູແລແມ່ນຕ້ອງການຈາກຜູ້ຊ່ຽວຊານດ້ານການປິ່ນປົວສຸຂະພາບຜູ້ທີ່ມີໃບປະກາດເຊັ່ນວ່ານາຍຫມໍລົງທະບຽນ. ດຽວນີ້, ມັນມີທາງເລືອກຂອງການເບິ່ງແຍງດແລຢູ່ຕາມເຮືອນຫລາຍໆທາງຊຶ່ງອາດຈະມີໄວ້ໃຫ້ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອນຳພາລະຫນ້າທີ່ການປິ່ນປົວສຸຂະພາບ.

### ການເບິ່ງແຍງດູແລທີ່ຖືກຊີ້ນຳໂດຍຕົນເອງ

ຖ້າທ່ານອາສັຍຢູ່ໃນເຮືອນຂອງທ່ານ, ທ່ານສາມາດຊີ້ນຳແລະຄວບຄຸມເບິ່ງນຳ IP ເພື່ອຈະຊ່ວຍເຫລືອທ່ານນຳພາລະຫນ້າທີ່ການປິ່ນປົວສຸຂະພາບທີ່ທ່ານບໍ່ສາມາດເຮັດເອງໄດ້ຍ້ອນສະພາບພິການຂອງທ່ານ. ອັນນີ້ຈະລວມເອົາສິ່ງທີ່ IP ອາດຈະບໍ່ສາມາເຮັດໄດ້ຕາມປົກກະຕິຊຶ່ງລວມເອົາການກຳກັບເບິ່ງນຳການຢາກິນ, ໂຄງການຖ່າຍ, ການແຫຍ່ຍ່ຽວ, ແລະການປິ່ນປົວບາດແຜ.

### ການແຕ່ງຕັ້ງນາຍພະຍາບານ

ຢູ່ໃນໂຄງການນີ້, ນາຍພະຍາບານຜ່ານການຮັບຮອງມາດຕະຖານ (RN) ຕີຣາຄາເບິ່ງຄວາມຕ້ອງການໃນການປິ່ນປົວສຸຂະພາບຂອງທ່ານແລະຝຶກອົບຣົມແລະຄວບຄຸມເບິ່ງນຳຜູ້ຊ່ວຍພະຍາບານຫລືຜູ້ຊ່ວຍການເບິ່ງແຍງດູແລຢູ່ເຮືອນເພື່ອໃຫ້ການດູແລສຸຂະພາບຕ່າງໆທີ່ທ່ານບໍ່ສາມາດເຮັດໃຫ້ຕົວທ່ານເອງໄດ້.ມັນມີກົດຣະບຽບບາງຢ່າງກ່ຽວກັບຊະນິດຂອງການປິ່ນປົວທີ່ສາມາດແລະບໍ່ສາມາດແຕ່ງຕັ້ງໃຫ້ໄດ້.

ຜູ້ຊ່ວຍພະຍາບານຫລືຜູ້ຊ່ວຍການປິ່ນປົວຢູ່ເຮືອນທີ່ຖືກຢັ້ງຢືນຕ້ອງໄດ້ຮັບການຝຶກອົບຮົມມາແລະໄດ້ຮັບອະນຸມັດຈາກນາຍຫມໍຜູ້ແຕ່ງຕັ້ງກ່ອນທີ່ຈະເຮັດໜ້າທີ່ວຽກທີ່ຖືກແຕ່ງຕັ້ງໃຫ້ທຸກໆຢ່າງ.ການແຕ່ງຕັ້ງນາຍຫມໍແມ່ນມີໄວ້ໃຫ້ທ່ານທັງຢູ່ໃນເຮືອນຂອງທ່ານຫລືໃນສະຖານທີ່ເບິ່ງແຍງດູແລຢູ່ຕາມເຮືອນຢູ່.

### ຫ້ອງການ Home Health

ຫ້ອງການ Home Health ເອົາໃຫ້ການເບິ່ງແຍງດູແລຜູ້ເຖົ້າທີ່ມີຄວາມຊຳນານຫລືຜູ້ຊ່ວຍ Home Health. ທ່ານຫມໍຂອງທ່ານຈະເຮັດການສົ່ງຕໍ່ໄປຫາຫ້ອງການ Home Health.

### ໂຄງການຮ໊ອສປິສ

ການເບິ່ງແຍງດູແລ Hospice ກ່ຽວພັນນຳຄະນະທີມງານຂອງນັກວິຊາການ ແລະ ຜູ້ອາສາສະມັກຜູ້ທີ່ໃຫ້ການເບິ່ງແຍງດູແລດ້ານການພະຍາບານ, ດ້ານຈິດໃຈ, ແລະການປິ່ນປົວດ້ວຍຄວາມເຊື່ອຖືແກ່ບຸກຄົນຜູ້ໃກ້ບັ້ນສຸດທ້າຍຂອງຊີວິດແລະຄອບຄົວຂອງເຂົາເຈົ້າ. ການເບິ່ງແຍງດູແລ Hospice ສ່ວນໃຫຍ່ແລ້ວແມ່ນບໍຣິການຢູ່ກັບເຮືອນຂອງທ່ານເອງແຕ່ກໍ່ຍັງມີບໍຣິການຢູ່ຕາມສະຖານທີ່ປິ່ນປົວອື່ນໆອີກ, ຊຶ່ງຮວມເອົາໂຮງພະຍາບານ. ທ່ານໝໍຂອງທ່ານຈະເຮັດການສົ່ງຕໍ່ໄປຫາການເບິ່ງແຍງດູແລ Hospice.

### ໂຄງການ Health Home

ໂຄງການ Health Home ສົ່ງເສີມການວາງແຜນການກະທຳຕໍ່ສຸຂະພາບລວມສູນໃສ່ບຸກຄົນເພື່ອຈະໃຫ້ພະລັງລູກຄ້າທີ່ຈະຄວບຄຸມການປິ່ນປົວສຸຂະພາບຂອງເຂົາເົ້າເອງ.ອັນນີ້ໄດ້ຖືກເຮັດສຳເຣັດຜ່ານການປະສານງານທີ່ດີກວ່າຣະຫວ່າງລູກຄ້າແລະຜູ້ບໍຣິການປິ່ນປົວສຸຂະພາບຂອງເຂົາເຈົ້າທຸກໆຄົນ

ການບໍຣິການ Health Home ເປັນຊຸດຂອງສະວັດດີການຂອງ Medicaid ທີ່ຈະເລືອກເອົາໄດ້ຊຶ່ງມີໄວ້ໃຫ້ແກ່ລູກຄ້າທີ່ມີເງື່ອນໄຂໄດ້ຮັບບາງຄົນ.ການເຂົ້າຮ່ວມນຳແມ່ນຕາມສະມັກໃຈ,ບໍ່ມີຄ່າໃດໆຕໍ່ລູກຂ້າ,ແລະບໍ່ປ່ຽນແປງຫລືຊ້ຳການບໍຣິການທີ່ກຳລັງຖືກເອົາໃຫ້ໃນປັດຈຸບັນ.ຜູ້ປະສານງານ Care Coordinator (CC) ຈະກ້າວເຂົ້າມາເມື່ອເວລາຕ້ອງການການບໍຣິການແລະຍັງບໍ່ທັນຖືກເອົາໃຫ້ເທື່ອ,ເພື່ອຈະເຊື່ອມຕໍ່ຊ່ອງວ່າງໃນການປິ່ນປົວ.ໂຄງການ Health Home ໄດ້ຖືກອອກແບບມາເພື່ອຈະ:

- ຮັບປະກັນການປະສານງານຣະບົບເບິ່ງໃສ່ກັນແລະການສົ່ງຕໍ່ການເບິ່ງແຍງດູແລ.
- ເພີ້ມຄວາມຫມັ້ນໃຈແລະຄວາມຊ່ຽວຊານສຳລັບການກຳກັບຄວບຄຸມເປົ້າຫມາຍສຸຂະພາບໂດຍຕົນເອງ;ແລະ
- ກໍ່ຕັ້ງຈຸດຕິດຕໍ່ຫາບ່ອນດຽວທີ່ຮັບຜິດຊອບສຳລັບການເຊື່ອມຕໍ່ຣະບົບການປິ່ນປົວທຸກໆຢ່າງ.

## ການບໍຣິການແນວອື່ນທີ່ສາມາດຊ່ວຍໄດ້

ຕໍ່ລົງໄປນີ້ແມ່ນການບໍຣິການເພີ້ມເຕີມຊຶ່ງອາດຈະມີໄວ້ໃຫ້ໂດຍອີງຕາມຄວາມຕ້ອງການຂອງທ່ານ.

### ການບໍຣິການກາງວັນສຳລັບຜູ້ໃຫຍ່

ການບໍຣິການກາງວັນສຳລັບຜູ້ໃຫຍ່ແມ່ນໂຄງການທີ່ເອົາການບໍຣິການໃຫ້ຢູ່ໃນແບບເປັນກຸ່ມຢູ່ນອກເຮືອນ. ໂຄງການການບໍຣິການກາງວັນສຳລັບຜູ້ໃຫຍ່ລວມເອົາການຊ່ວຍເຫລືອດ້ານການບົວຣະບັດສ່ວນຕົວ, ກິຈກັມການເຄື່ອນໄຫວທາງສັງຄົມແລະການຮັກສາໂຣກ, ການສຶກສາ, ການກຳກັບຄວບຄຸມສຸຂະພາບປະຈຳ, ອາຫານແລະຂອງກິນຫລິ້ນທີ່ມີພະລານາມັຍ, ການປະສານງານດ້ານການຂົນສົ່ງ, ການປະຖົມພະຍາບານ, ແລະການພະຍາບານສຸກເສີນ.

ໂຄງການການບໍລິການກາງວັນສຳລັບຜູ້ໃຫຍ່ເອົາການບໍລິການທັງໝົດເຫລົ່ານີ້ໃຫ້ບວກກັບການເບິ່ງແຍງຜູ້ເຖົ້າແລະການຝຶກກາຍບໍລິຫານເພື່ອຄືນສູ່ສະພາບເດີມ.

### ເທັກໂນໂລຈີຊ່ວຍເຫລືອ

ເຄື່ອງປັບໃສ່ຫລືອຸບປະກອນຊ່ວຍເຫລືອທີ່ເພີ້ມຄວາມເປັນເອກະຣາດຂອງທ່ານຂຶ້ນຫລືໃຊ້ແທນຄວາມຊ່ວຍເຫລືອຈາກມະນຸດ, ໂດຍສະເພາະແລ້ວກ່ຽວກັບພາລະກິດຂອງການເບິ່ງແຍງດູແລສ່ວນຕົວ, ຄອບຄົວ, ຫລືກ່ຽວຂ້ອງນຳສຸຂະພາບ.

### ການດັດແປງສະພາບແວດລ້ອມ

ການດັດແປງຕ່າງໆ,ເຊັ່ນການເຮັດທາງໃຫ້ລໍ້ເຂັນແລ່ນເຂົ້າເຮືອນ, ຣາວຈັບຢູ່ຫ້ອງອາບນ້ຳຫລືໃກ້ກັບສ້ວມຖ່າຍ, ຫລືການຂະຫຍາຍປະຕູເຂົ້າໃຫ້ກວ້າງອອກເພື່ອວ່າລໍ້ເຂັນຈະແລ່ນເຂົ້າເຮືອນໄດ້, ອາດຈະຖືກເພີ່ມເຂົ້າໃສ່ເຮືອນຂອງທ່ານເພື່ອຊ່ວຍໃຫ້ທ່ານປັບຕົວເຂົ້າໃສ່ຄວາມຕ້ອງການຕໍ່ການປ່ຽນແປງໄດ້ຢ່າງປອດພັຍ.

### ບ່ອນຢູ່ອາສັຍທີ່ຖືກອູ້ມຊູຊ່ວຍເຫລືອ

ສຳລັບບຸກຄົນຜູ້ທີ່ມີເງື່ອນໄຂໄດ້ຮັບທີ່ບໍ່ມີເຮືອນຢູ່, ຢູ່ໃນໂຮງພະຍາບານຫລືມີຄວາມຫຍຸ້ງຍາກໃນການຮັກສາບ່ອນຢູ່ອາສັຍທີ່ໝັ້ນຄົງ, ບ່ອນຢູ່ອາສັຍທີ່ຖືກອູ້ມຊູຊ່ວຍເຫລືອຈະເອົາການບໍຣິການມຸ່ງໃສ່ບຸກຄົນເພື່ອຈະຊ່ວຍໃຫ້ໄດ້ບ່ອນຢູ່ອາສັຍມາແລະຮັກສາເອົາໄວ້.ອັນນີ້ລວມເອົາການອູ້ມຊູເພື່ອຊອກຫາແລະຮັກສາໄວ້/ກໍ່ຕັ້ງໃຫ້ເປັນເຮືອນຢູ່ເປັນເອກະຣາດແລະຄວາມຊ່ວຍເຫລືອທີ່ດຳເນີນຕໍ່ໄປນຳການເພື່ອຮັກສາບ່ອນຢູ່ເອົາໄວ້.

### ວຽກງານທີ່ຖືກອູ້ມຊູຊ່ວຍເຫລືອ

ການບໍຣິການດ້ານວຽກງານທີ່ຖືກອູ້ມຊູຊ່ວຍເຫລືອຈະຊ່ວຍບຸກຄົນໃຫ້ຊອກຫາແລະຮັກສາເອົາໄວ້ວຽກງານທີ່ແຂ່ງຂັນກັນໄດ້ຢູ່ໃນຊຸມນຸມຊົນຂອງເຂົາເຈົ້າ. ການບໍຣິການລວມເອົາການຊ່ວຍເຫລືອໃນການຊອກເບິ່ງວຽກງານແລະນາຍຈ້າງທີ່ອາດຈະເປັນໄປໄດ້,ການປຶກສາກ່ຽວກັບສະວັດດີການ, ການອູ້ມຊູຜ່ານການດຳເນີນການຈ້າງເອົາແລະການປຶກສາແນະນຳວຽກງານເພື່ອຈະຮັກສາວຽກງານໄວ້.

### ອາຫານສົ່ງໃຫ້ຢູ່ຕາມເຮືອນ

ອາຫານທີ່ມີທາດບຳຣຸງປະຈຳວັນຈະຖືກນຳສົ່ງໃຫ້ເຖິງເຮືອນຂອງທ່ານ.

### ການຝຶກຝົນສ່ວນບຸກຄົນ

ການຝຶກອົບຮົມຈະຖືກເອົາໃຫ້ຖ້າຫາກວ່າທ່ານຫລືຜູ້ໃຫ້ການເບິ່ງແຍງດູແລຂອງທ່ານຕ້ອງການຣາຍຣະອຽດ/ຄວາມຊຳນານເພີ້ມເຕີມອີກເພື່ອຈະດຳເນີນແຜນການປິ່ນປົວພະຍາບານຂອງທ່ານໃຫ້ໄດ້ຜົນດີຫລືຊ່ວຍເຫລືອທ່ານໃນການກຳກັບເບິ່ງນຳການປະພຶດ.

### ອຸບປະກອນພະຍາບານພິເສດແລະເຄື່ອງໃຊ້

ອຸປກອນພະຍາບານແລະເຄື່ອງໃຊ້ທີ່ຈຳເປັນສຳລັບທ່ານເພື່ອຈະດຳຣົງຊີວິດຢ່າງເອກະຣາດທີ່ບໍ່ຖືກຄຸ້ມກັນໂດຍMedicaid, Medicare ຫລືປະກັນພັຍແນວອື່ນ.

### ຣະບົບການຕອບຕໍ່ເຫດການສຸກເສີນສ່ວນຕົວ (PERS)

ເຄື່ອງເອເລັກໂທຣນິກຈະຖືກເອົາໃຫ້ທ່ານເພື່ອຊ່ວຍທ່ານໃຫ້ໄດ້ຮັບຄວາມຊ່ວຍເຫລືອຍາມສຸກເສີນ. ຣະບົບດັ່ງກ່າວຈະຖືກຕິດຕັ້ງຕໍ່ໃສ່ກັບໂທຣະສັບຂອງທ່ານ ຫລືທ່ານອາດຈະຖືປຸ່ມບີບ "ຊ່ວຍ"ທີ່ຖືໄປມາໄດ້. ເມື່ອຖືກເລີ່ມເປີດຂຶ້ນ, ພະນັກງານຢູ່ສູນກາງຕອບກໍ່ຈະໂທຫາ 911 ແລະ/ຫລືເຮັດທຸກຢ່າງຕາມທີ່ໄດ້ວາງແຜນໄວ້ລ່ວງໜ້າແລ້ວ.

### ການຂົນສົ່ງໄປມາ

ການຂົນສົ່ງໄປມາໃນຂອບເຂດຈຳກັດແມ່ນມີໃຫ້ເພື່ອຊ່ວຍເຫລືອທ່ານໄປເຖິງການປິ່ນປົວແລະກິຈກັມທີ່ຕ້ອງການ.

### ການຝຶກອົບຮົມເພີ້ມພູນຄວາມຊຳນານ

ການຝຶກອົບຮົມທີ່ຖືກເອົາໃຫ້ທ່ານເພື່ອຈະກາຍເປັນເອກຮາດໄດ້ຫລາຍກວ່າເກົ່ານຳການເບິ່ງແຍງດູແລສ່ວນຕົວຂອງທ່ານ.

### ການຝຶກອົບຮົມກ່ຽວກັບການບໍຣິຫານຜູ້ເບິ່ງແຍງດູແລ

ແຫລ່ງຊ່ວຍເຫລືອທີ່ຈະຊ່ວຍທ່ານຮຽນຮູ້ວ່າຈະຈ້າງເອົາ, ໄລ່ອອກ, ແລະຄວບຄຸມກຳກັບຜູ້ໃຫ້ການເບິ່ງແຍງດູແລສ່ວນຕົວຂອງທ່ານແນວໃດ.



### ໂຄງການເພີ້ມເຕີມ

ໂຄງການຕໍ່ລົງໄປນີ້ໄດ້ຖືກຈຳກັດເຖິງເຂດພື້ນທີ່ບາງບ່ອນທົ່ວຣັດ.ຈົ່ງເວົ້ານຳພະນັກງານສັງຄົມຂອງທ່ານເພື່ອຈະຮຽນຮູ້ເພີ້ມເຕີມກ່ຽວກັບໂຄງການເຫລົ່ານີ້.

#### ການບໍຣິການ New Freedom ທີ່ຖືກຊີ້ນຳທາງໂດຍລູກຄ້າ

New Freedom ສະເນີໃຫ້ທ່ານໂອກາດສຳລັບຄວາມຮັບຜິດຊອບເພີ້ມຂື້ນ,ທາງເລືອກແລະການຄວບຄຸມໃນການບໍຣິການແລະການອູ້ມຊູຂອງທ່ານ.ມັນເປັນທາງເລືອກທີ່ຖືກຊີ້ນຳໂດຍຜູ້ເຂົ້າຮ່ວມ. ດ້ວຍໂຄງການNew Freedom, ທ່ານຈະໄດ້ຮັບງົບປະມານປະຈຳເດືອນເພື່ອຈະຊື້ເອົາການບໍຣິການແລະສີ່ງຂອງເພື່ອຈະຊ່ວຍທ່ານໃຫ້ດຳຣົງຊີວິດໃຫ້ເປັນເອກະຣາດໄດ້ເທົ່າທີ່ຈະເປັນໄປໄດ້.

ຜູ້ປຶກສາຜູ້ທີ່ຮູ້ຈັກດີກ່ຽວກັບທາງເລືອກເອົາການບໍຣິການຢູ່ໃນທ້ອງຖິ່ນຈະຣັດວຽກນຳທ່ານເພື່ອຈະຊື້ເອົາການບໍຣິການທີ່ທ່ານຕ້ອງການ. ພະແນກຄວບຄຸມກຳກັບນຳການເງິນຈະຈ່າຍເງິນໃຫ້ຜູ້ບໍຣິການຂອງທ່ານແລະຊ່ວຍຄວບຄຸມເບິ່ງນຳເງິນງົບປະມານຂອງທ່ານ.

ໂຄງການ New Freedom ມີໄວ້ໃຫ້ໃນປັດຈຸບັນນີ້ສຳລັບບຸກຄົນຜູ້ທີ່ອາສັຍຢູ່ໃນຄິງຄາວຕີແລະພຽກຊ໌ຄາວຕີ.

#### ໂຄງການ Program of All-Inclusive Care for the Elderly (PACE)

ໂຄງການPACE ເອົາການເຂົ້າເຖິງທີ່ຮວມການບໍຣິການ, ມີຣະບຽບວິນັຍຫລາຍຢ່າງ,ເປັນທີມງານໃນການປິ່ນປົວສຸຂະພາບແລະການບໍຣິການສັງຄົມສຳລັບຜູ້ໃຫຍ່ອາຍຸ 55 ປີແລະແກ່ກວ່າຢູ່ທີ່ສູນກາງ PACE ທ້ອງຖິ່ນ.ຖືກແຕ່ງອອກມາສະເພາະເພື່ອຕອບສະນອງຄວາມຕ້ອງການຂອງແຕ່ລະບຸກຄົນ, ສູນກາງ PACE ທ້ອງຖິ່ນເປັນຈຸດມຸ່ງຫມາຍໃສ່ສຳລັບການປະສານງານແລະການເອົາການບໍຣິການສ່ວນຫລາຍໃຫ້.

ໂຄງການ PACE ມີໄວ້ໃຫ້ໃນປັດຈຸບັນນີ້ໃນເຂດຊົບໂຄດເຈາະຈົງພາກສ່ວນນຶ່ງຂອງKing, Spokane, Pierce ແລະ Snohomish ຄາວຕີ.ເພື່ອຮູ້ຈັກເພີ່ມເຕີມອີກກ່ຽວກັບໂຄງການPACE, ໂທຫາ Providence ElderPlace (King, Spokane ແລະ Snohomish ຄາວຕີ) ໄດ້ທີ່ເລກ 206-320-5325, International Community Health Services (King County ເທົ່ານັ້ນ) ໄດ້ທີ່ເລກ 206-462-7100, PNW PACE Partners (King ElA Pierce ຄາວຕີ) ໄດ້ທີ່ເລກ 253-459-7270.

## ທາງເລືອກສຳລັບບ່ອນຢູ່ອາສັຍແລະການເບິ່ງແຍງດູແລ

ມັນມີທາງເລືອກຫລາຍໆທາງວ່າທ່ານສາມາດອາສັຍຢູ່ໃສແລະໄດ້ຮັບການເບິ່ງແຍງດູແລຖ້າຫາກວ່າທ່ານເລືອກເອົາ.ຄົນສ່ວນຫລາຍຄຸ້ນເຄີຍນຳເຮືອນເບິ່ງແຍງດູແລຜູ້ເຖົ້າ.ຜູ້ຄົນຈະບໍ່ຄຸ້ນເຄີຍນຳທາງເລືອກຂອງການເບິ່ງແຍງດູແລອາສັຍຢູ່ນຳແນວອື່ນປານໃດ.

ການອາສັຍຢູ່ທີ່ໄດ້ຮັບຄວາມຊ່ວຍເຫລືອຈະຖືກໃຊ້ສະເນີເພື່ອຈະອະທິບາຍສະຖານທີ່ເບິ່ງແຍງດູແລອາສັຍຢູ່ນຳຕ່າງໆທີ່ເອົາບ່ອນຢູ່ອາສັຍໃຫ້,ການບໍຣິການຈຳເປັນແລະຮັບເອົາຄວາມຮັບຜິດຊອບທົ່ວໄປສຳລັບຄວາມປອດພັຍແລະຄວາມຢູ່ດີມີແຮງຂອງຜູ້ອາສັຍຢູ່.

ສີ່ງຕໍ່ລົງໄປນີ້ແມ່ນຣາຍລະອຽດທີ່ຊ່ວຍເຫລືອໄດ້ຫລາຍບາງຢ່າງກ່ຽວກັບທາງເລືອກບ່ອນຢູ່ສຳລັບການເບິ່ງແຍງດູແລຢູ່ຕາມເຮືອນທີ່ອາດຈະເປັນໄປໄດ້ສຳລັບບຸກຄົນຜູ້ທີ່ໄດ້ຮັບ Apple Health LTSS. ສະຖານທີ່ຕ້ອງຖືກອອກໃບອະນຸຍາດໃຫ້ໂດຍຣັດວໍຊິງຕັນແລະຮັບເອົາການຈ່າຍເງິນຂອງ Apple Health LTSS ສຳລັບຜູ້ອາສັຍຢູ່.

ມັນມີທາງເລືອກຫລາຍໆທາງທີ່ທ່ານສາມາດອາສັຍຢູ່ແລະໄດ້ຮັບການປິ່ນປົວຖ້າຫາກວ່າທ່ານບໍ່ສາມາດຢູ່ໃນເຮືອນໄດ້ຕໍ່ໄປອີກແລ້ວ.

## ເຮືອນຄອບຄົວຜູ້ໃຫຍ່ແລະສະຖານທີ່ອາສັຍຢູ່ທີ່ໄດ້ຮັບຄວາມຊ່ວຍເຫລືອ

**Adult Family Home (AFH)** ຖືກອອກໃບອະນຸຍາດໃຫ້ເພື່ອຈະເອົາບ່ອນຢູ່ອາສັຍແລະການເບິ່ງແຍງດູແລໃຫ້ຮອດເຖິງແປດຄົນຢູ່ໃນເຮືອນ. AFHs ເອົາຫ້ອງນອນທັງສ່ວນຕົວແລະຢູ່ຮ່ວມກັນໃຫ້ພ້ອມທັງບ່ອນວ່າງຮ່ວມກັນ.AFH ອາດຈະຖືກດຳເນີນທຸຣະກິດໂດຍຄອບຄົວທີ່ມີເດັກ, ຄົນໂສດ, ຄູ່ຜົວເມັຽ, ຫມູ່ເພື່ອນ, ຫລືຜູ້ຮ່ວມການຄ້າກໍໄດ້.AFH ຈະຈ້າງເອົາຄົນງານຄົນອື່ນໄດ້. AFH ບາງບ່ອນອະນຸຍາດໃຫ້ມີສັດລ້ຽງໄດ້. ໃນບາງເຮືອນ, ຫລາຍພາສາກໍ່ອາດໃຊ້ປາກເວົ້າກັນ.

**Assisted Living Facility (ALF)** ໄດ້ຖືກອອກໃບອະນຸຍາດໃຫ້ເພື່ອຈະເອົາບ່ອນຢູ່ອາສັຍແລະການເບິ່ງແຍງດູແລໃຫ້ຮອດເຖິງເຈັດຄົນຫລືຫລາຍກວ່ານັ້ນຢູ່ໃນເຮືອນຫລືສະຖານທີ່ອາສັຍຢູ່.ທາງເລືອກບ່ອນອາສັຍຢູ່ເລີ້ມຕັ້ງແຕ່ຫ້ອງຢູ່ນຳກັນໄປເຖິງຫ້ອງຄ້າຍຄືກັນກັບອາພັດເມັນຂອງທ່ານເອງ,ທຸກໆຫ້ອງມີການເຂົ້າເຖິງບ່ອນອາສັຍຢູ່ລວມກັນ. ALF ແຕກຕ່າງກັນໄປໃນຂະນາດແລະການເປັນເຈົ້າຂອງຈາກການດຳເນີນກິຈການທີ່ມີ7ຕຽງນອນຊຶ່ງຖືກດຳເນີນກິຈການໂດຍຄອບຄົວນຶ່ງ, ໄປຫາສະຖານທີ່ຊຶ່ງມີ 150 ຕຽງນອນຊຶ່ງຖືກດຳເນີນກິຈການໂດຍບໍຣິສັດໃຫຍ່ຣະດັບຊາດ.

**AFHs** ແລະ **ALFs** ທຸກໆບ່ອນເອົາບ່ອນຢູ່ອາສັຍແລະອາຫານໃຫ້ (ຫ້ອງແລະກິນນອນ) , ແຕກຕ່າງການໄປໃນຣະດັບຂອງການຊ່ວຍເຫລືອນຳການເບິ່ງແຍງດູແລສ່ວນຕົວ, ແລະຮັບເອົາຄວາມຮັບຜິດຊອບທົ່ວໄປສຳລັບຄວາມປອດພັຍແລະການເບິ່ງແຍງດູແລຂອງທ່ານ. ການບໍຣິການເພີ້ມເຕີມແນວໃດແດ່ທີ່ຖືກເອົາໃຫ້ກໍ່ແຕກຕ່າງກັນສຳລັບແຕ່ລະເຮືອນແລະອາດຈະລວມເອົາ:

- ການບໍຣິການພະຍາບານບາງຄັ້ງຄາວ (ນາຍພະຍາບານມີໄວ້ໃຫ້ແບບເຄິ່ງເວລາ) .
- ການຊ່ວຍເບິ່ງນຳຫລືການຄວບຄຸມນຳການກິນຢາ.
- ການເບິ່ງແຍງດູແລພິເສດສະເພາະໃຫ້ແກ່ບຸກຄົນຜູ້ທີ່ດຳຣົງຊີວິດນຳຄວາມພິການດ້ານການຈະເຣີນເຕີບໂຕ, ຄວາມຈຳເຊື່ອມ, ຫລືຄວາມເຈັບປ່ວຍດ້ານສຸຂະພາບຈິດ.

ພະນັກງານສັງຄົມຂອງທ່ານຈະມີລາຍຊື່ແລະຄວາມຮູ້ຈັກຄຸ້ນເຄີຍວ່າເຮືອນບ່ອນໃດແດ່ທີ່ມີຢູ່ໃນເຂດທ້ອງຖິ່ນຂອງທ່ານ. ລາຍຊື່ຂອງເຮືອນຄອບຄົວຜູ້ໃຫຍ່ແລະສະຖານທີ່ອາສັຍຢູ່ທີ່ໄດ້ຮັບຄວາມຊ່ວຍເຫລືອຍັງສາມາດຖືກພົບເຫັນໄດ້ອີກຢູ່ໃນອິນເຕີແນດທີ່ www.dshs.wa.gov/altsa/long-term-care-services-information.

*Choosing Care in an Adult Family Home or Assisted Living Facility* (DSHS 22-707) ເປັນປື້ມນ້ອຍຟຣີຈາກກົມ DSHS ຊຶ່ງຈະເວົ້າກ່ຽວກັບວ່າຈະຊອກຫາແລະເລືອກເອົາເຮືອນບ່ອນເຫມາະສົມສຳລັບທ່ານໄດ້ແນວໃດ. ປື້ມນ້ອຍຈະລວມເອົາລາຍການຫມາຍອອກຂອງສິ່ງທີ່ຈະຖາມແລະຊອກເບິ່ງຊຶ່ງຈະສາມາດຊ່ວຍເຫລືອທ່ານທຳການຕັດສິນໃຈຂອງທ່ານ. ອ່ານຢູ່ທາງອິນເຕີແນດໄດ້ທີ່ www.dshs.wa.gov/SESA/publications-library,ໂດຍການຕີພິມ 22-707 ການເຂົ້າໃສ່ເຄື່ອງມືຊອກຫາ.

## ສະຖານທີ່ເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງ

ສະຖານທີ່ເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງເອົາໃຫ້ຕະລອດ24 ຊົ່ວໂມງ, ການເບິ່ງແຍງດູແລຜູ້ເຖົ້າທີ່ຖືກຄວບຄຸມເບິ່ງນຳ,ການເບິ່ງແຍງດູແລສ່ວນຕົວ, ການຝຶກແອບ, ການກຳກັບນຳອາຫານການກິນ, ກິຈກັມທີ່ຖືກຈັດແຈງໄວ້ໃຫ້,ການບໍຣິການສັງຄົມ, ຫ້ອງຢູ່, ການກິນນອນ, ແລະການບໍຣິການຊັກເຄື່ອງ.

ຖ້າຫາກວ່າທ່ານຫລືຄົນໃດຄົນນຶ່ງຜູ້ທີ່ທ່ານຮັກຈະເຂົ້າສະຖານທີ່ເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງ, ທ່ານຈະພົບເຫັນວ່າມັນຊ່ວຍເຫລືອໄດ້ຫລາຍທີ່ຈະປຽບທຽບສະຖານທີ່ເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງຫລາຍໆເຂົ້າບ່ອນໃສ່ ກັນກ່ອນການເຂົ້າໄປນອນ. ທ່ານຍັງຈະສາມາດປຽບທຽບສະຖານທີ່ເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງທີ່ຖືກຢັ້ງຢືນໂດຍ Medicare ແລະ Medicaid ເຂົ້າໃສ່ກັນອີກ

ໄດ້ທີ່ www.medicare.gov/nursinghomecompare/search.html. ການໃຫ້ຄະແນນໄດ້ຖືກອີງໃສ່ການກວດເບິ່ງສຸຂະພາບ, ການວັດແທກຄຸນນະພາບແລະການໃຫ້ຄະແນນຂອງພະນັກງານ.

ການເຂົ້າໄປຢູ່ສະຖານທີ່ເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງບໍ່ໄດ້ຫມາຍຄວາມຕໍ່ໄປອີກແລ້ວວ່າທຸກໆຄົງຈະຢູ່ທີ່ນັ້ນໄປຕະລອດເລີຍ. ບຸກຄົນຍັງຈະເຂົ້າໄປຢູ່ສະຖານທີ່ເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງສຳລັບການຝຶກບຳບັດຫລືສຳລັບຣະຍະເວລາສັ້ນ,ການເບິ່ງແຍງດູແລໄກ້ສິດ.ຄົນຈະໄຄຂື້ນຢູ່ສະເມີແລະຕັດສິນໃຈວ່າເຂົາເຈົ້າຢາກຈະກັບຄືນເມືອຢູ່ເຮືອນແລະຮັບເອົາການບໍຣິການປິ່ນປົວຢູ່ທີ່ນັ້ນ.

### ການກັບຄືນມາເຮືອນຫລັງຈາກການຢູ່ໃນສະຖານທີ່ເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງຫລືໂຮງພະຍາບານ

ຖ້າຫາກວ່າທ່ານກຳລັງອາສັຍຢູ່ໃນສະຖານທີ່ເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງໃນປັດຈຸບັນນີ້ຫລືໄດ້ເຂົ້າໂຮງພະຍາບານມາແລ້ວ, ມັນອາດຈະມີການບໍຣິການແລະການອູ້ມຊູຫລາຍໆຢ່າງທີ່ມີໄວ້ໃຫ້ເພື່ອຈະຊ່ວຍເຫລືອທ່ານໃຫ້ກັບຄືນເມືອເຮືອນຫລືທີ່ຈະເລືອກເອົາທາງເລືອກເອົາບ່ອນຢູ່ອາສັຍອື່ນໆບ່ອນທີ່ທ່ານສາມາດໄດ້ຮັບການປິ່ນປົວທີ່ທ່ານຕ້ອງການ. ຜູ້ຈັດການເອກສານກ່ຽວກັບສະຖານທີ່ເບິ່ງແຍງຜູ້ເຖົ້າຈາກຫ້ອງການHCS ຫ້ອງຖິ່ນຂອງທ່ານຈະຊ່ວຍເຫລືອທ່ານທວບທວນເບິ່ງຄືນໃນທາງເລືອກໃນການປິ່ນປົວແລະບ່ອນຢູ່ອາສັຍຂອງທ່ານແລະເຮັດວຽກນຳທ່ານເພື່ອຈະອອກແບບແຜນການປ່ອຍຕົວອອກມາ.

ນອກຈາກນັ້ນອີກ, ຜູ້ຈັດການເອກສານກ່ຽວກັບສະຖານທີ່ເບິ່ງແຍງຜູ້ເຖົ້າສາມາດຊ່ວຍຊີ້ບອກການບໍຣິການຜົນປ່ຽນຕໍ່ມາທີ່ອາດຈະມີໄວ້ໃຫ້ແກ່ທ່ານ. ຕົວຢ່າງຂອງການບໍຣິການເຫລົ່ານີ້ຈະລວມເອົາຄວາມຊ່ວຍເຫລືອ:

- ການົ້ມວົ້າຊອກຫາທາງເລືອກບ່ອນຢູ່ອາສັຍຂອງທ່ານແລະການຊອກຫາບ່ອນທີ່ຈະຢູ່.
- ການເຮັດແຜນການປ່ອຍຕົວແລະການປິ່ນປົວສ່ວນບຸກນອອກມາ.
- ການຈ່າຍຄ່າຣາຍຈ່າຍບາງຢ່າງສຳລັບເຮືອນຂອງທ່ານໃນຂະນະທີ່ທ່ານກຳລັງຢູ່ໃນສະຖານທີ່ເບິ່ງແຍງຜູ້ເຖົ້າ (ສຳລັບເຖິງຫົກເດືອນ).
- ການຈ່າຍເງິນປະກັນພັຍມັດຈຳຫລືການເປີດນ້ຳໄຟໃຫ້ໃຊ້ການໄດ້.
- ການດັດແປງເຮືອນຂອງທ່ານເມື່ອເວລາຈຳເປັນເພື່ອຈະເຮັດໃຫ້ປອດພັຍກວ່າ, ເຊັ່ນວ່າການຕື່ມທາງແລ່ນຂື້ນຂອງລໍ້ຊຸກຫລືຣາວກຳຢູ່ຫ້ອງນ້ຳ.
- ການຕັ້ງຕົວໃຫມ່ອີກຢູ່ໃນຊຸມນຸມຊົນ.

ຕິດຕໍ່ຫາຜູ້ຈັດການເອກສານຂອງສະຖານທີ່ເບິ່ງແຍງຜູ້ເຖົ້າຂອງທ່ານຫລືຫ້ອງການທ່ຳສຫ້ອງຖິ່ນຂອງທ່ານເພື່ອຣາຍຣະອຽດເພີ້ມເຕີມ (ເບິ່ງຫນ້າ 24 ຂອງປື້ມນ້ອຍເພື່ອເລກໂທຣະສັບ).

# ທ່ານມີທາງເລືອກ...

ປື້ມນ້ອຍຫົວນີ້ໄດ້ໃຫ້ຂ່າວຂໍ້ມູນໃຫ້ທ່ານກ່ຽວກັບການຮ້ອງຂໍເອົາMedicaid ແລະທາງເລືອກຂອງທ່ານສຳລັບການເບິ່ງແຍງດູແລຖ້າທ່ານຫາກມີເງື່ອນໄຂໄດ້ຮັບ.

ມັນມີຫລາຍໆຄົນ, ຫລາຍໆທາງເລືອກ, ແລະມີຫລາຍແຫລ່ງຊ່ວຍເຫລືອໄວ້ໃຫ້ເພື່ອຊ່ວຍທ່ານໃຫ້ຢູ່ດ້ວຍຕົນເອງໂດຍບໍ່ຂື້ນນຳໃຜເທົ່າທີ່ເປັນໄປໄດ້.

ການເຂົ້າຮ່ວມໃນການບໍຣິການຢູ່ຕາມເຮືອນແລະຊຸມນຸມຊົນແມ່ນຕາມສະມັກໃຈ. ທ່ານມີສິດທີ່ຈະປະຕິເສດຫລືຢຸດການບໍຣິການໄດ້ທຸກໆເວລາ.

ດ້ວຍການອູ້ມຊູຊ່ວຍເຫລືອ, ທ່ານອາດຈະບໍ່ຕ້ອງໄດ້ຢູ່ໃນສະຖານທີ່ປິ່ນປົວເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງ.

ດ້ວຍການອູ້ມຊູຊ່ວຍເຫລືອ, ທ່ານອາດຈະບໍ່ຕ້ອງໄດ້ຢູ່ໃນສະຖານທີ່ປິ່ນປົວເບິ່ງແຍງຜູ້ເຖົ້າຫລືຄົນບໍ່ແຂງແຮງ.

ເມື່ອເວລາໃດທີ່ທ່ານເລີ່ມຕົ້ນໄດ້ຮັບການບໍລິການຕ່າງໆແລ້ວ, ໃຫ້ທ່ານຕິດຕໍ່ຫາພະນັກງານສັງຄົມຂອງທ່ານ ຖ້າທ່ານຫາກມີຄໍາຖາມຫລືຄວາມຕ້ອງການໃນການເບິ່ງແຍງດູແລຂອງທ່ານໄດ້ປ່ຽນແປງ.

## ໂຄງການ **Community Living Connections (CLC)**

Community Living Connections (CLC) ແມ່ນສາຍງານຂອງອົງການແລະ ໂຄງການທີ່ນ່າເຊື່ອຖື,ຖືກອອກເງິນທຶນໃຫ້ຈາກສາທາລະນະຊົນ, ຖືກຮ້ອງຊື່ໃນຫລາຍໆທາງ, ເຊັ່ນວ່າ Aging & Disability Resources, Senior Information & Assistance, ຫລື Community Living Connections. ພວກເຂົາສ່ວນຫລາຍແລ້ວເປັນພາກສ່ວນນຶ່ງຂອງ Area Agency on Aging (AAA) ທ້ອງຖິ່ນ. ພະນັກງານຈະຊ່ວຍທ່ານຮຽນຮູ້ແລະພິຈາລະນາເບິ່ງ:

- ການບໍລິການແລະການອູ້ມຊູຣະຍະຍາວແນວໃດແດ່ທີ່ເໝາະສົມທີ່ສຸດກັບຄວາມເພິ່ງພໍໃຈແລະສະພາບການຂອງທ່ານ?
- ທຶນທາງແບບອື່ນແນວໃດແດ່ທີ່ຈະຈ່າຍສໍາລັບການບໍລິການເຫລົ່ານີ້?
- ມີແນວໃດແດ່ໄວ້ໃຫ້ຢູ່ໃນເຂດຂອງທ່ານ?

ຖ້າຫາກວ່າທ່ານບໍ່ແນ່ໃຈວ່າ Apple Health LTSS ແມ່ນສໍາລັບທ່ານ, ທ່ານສາມາດເວົ້າລົມນໍາຄົນໃດຄົນນຶ່ງຢູ່ທີ່ CLC ທ້ອງຖິ່ນຂອງທ່ານກ່ຽວກັບທາງເລືອກທາງອື່ນຕໍ່Apple Health/Medicare, ແລະທາງເລືອກອື່ນໆທີ່ມີໄວ້ໃຫ້ຢູ່ໃນເຂດຂອງທ່ານ. ພະນັກງານຈະຜູ້ປຶກສາ CLCຈະໃຊ້ການສົນທະນາມຸ່ງໃສ່ບຸກຄົນເພື່ອຊ່ວຍເຫລືອທ່ານຮູ້ຈັກດີກວ່າເກົ່າສໍາລັບທ່ານເອງ,ແມ່ນຫຍັງສໍາຄັນຕໍ່ທ່ານ, ແມ່ນຫຍັງສໍາຄັນຕໍ່ຄວາມຢູ່ເຢັນເປັນສຸກຂອງທ່ານ, ແລະການບໍລິການແລະການອູ້ມຊູຣະຍະຍາວອາດຈະຊ່ວຍທ່ານໃຫ້ບັນລຸເປົ້າໝາຍຂອງທ່ານໄດ້ຢ່າງໃດໃນຂະນະທີ່ຮັກສາທາງເລືອກເອົາໄວ້ແລະຄວບຄຸມຊີວິດຂອງທ່ານທັງໝົດ.

ພະນັກງານຂອງCLC ສາມາດໃຫ້ຄວາມຊ່ວຍເຫລືອເພື່ອຈະເຂົ້າເຖິງໂຄງການແລະການບໍລິການທີ່ຕ້ອງການ, ລວມທັງອັນທີ່ຖືກອອກເງິນທຶນໃຫ້ໂດຍ Medicaid, Older Americans Act, Veterans Health Administration, ແລະຫ້ອງການຂອງຣັດຖະບານກາງ, ຂອງຣັດແລະຂອງທ້ອງຖິ່ນ, ລວມທັງວ່າຈະຈ່າຍສ່ວນຕົວຢ່າງສະຫລາດສໍາລັບສິ່ງທີ່ທ່ານຈະຕ້ອງການໄດ້ຢ່າງໃດ.

ແວ່ເຂົ້າຢ້ຽມແວບໄຊທ໌ຂອງWashington's Community Living Connections www.waclc.org.ທ່ານຈະພົບເຫັນແຫລ່ງທີ່ຊ່ວຍເຫລືອຫລາຍໆບ່ອນມີໄວ້ໃຫ້ຢູ່ທີ່ນັ້ນຫລືທ່ານສາມາດພິມໃສ່"Connect", ແລ້ວພິມໃສ່ຄາວຕີຂອງທ່ານເພື່ອລາຍຣະອຽດການຕິດຕໍ່ຫາ. ຫລືທ່ານສາມາດໂທຫາເລກ1-855-567-0252 ເພື່ອຈະເວົ້າລົມນໍາຄົນໃດຄົນນຶ່ງກ່ຽວກັບວ່າການບໍລິການແນວໃດແດ່ ແລະແຫລ່ງຊ່ວຍເຫລືອແນວໃດມີໄວ້ໃຫ້ແດ່ຢູ່ບ່ອນທີ່ທ່ານອາສັຍຢູ່.

## ໂຄງການ **Tailored Supports for Older Adults (TSOA)**

Tailored Supports for Older Adults (TSOA) ແມ່ນການບໍລິການຂອງ Apple Health LTSSທີ່ຖືກເອົາໃຫ້ຜ່ານໂຄງການ Medicaid Transformation Project Demonstration. ມັນອູ້ມຊູຜູ້ເບິ່ງແຍງດູແລທີ່ເປັນສະມາຊິກຄອບຄົວຜູ້ທີ່ບໍ່ຖືກຈ່າຍເງິນໃຫ້ຜູ້ທີ່ເອົາການເບິ່ງແຍງດູແລໃຫ້ແກ່ຄົນໃດຄົນນຶ່ງຜູ້ທີ່ມີອາຍຸ55ປີຫລືແກ່ກວ່າ. ມັນຍັງສາມາດເອົາການອູ້ມຊູທີ່ຈໍາກັດໃຫ້ໄດ້ອີກຄືກັນໃຫ້ແກ່ບຸກຄົນຜູ້ທີ່ບໍ່ມີຜູ້ເບິ່ງແຍງດູແລທີ່ເປັນສະມາຊິກຄອບຄົວ. ຄົນທີ່ກໍາລັງຮັບເອົາການເບິ່ງແຍງດູແລຢູ່ (ຜູ້ຮັບເອົາການເບິ່ງແຍງດູແລ) ຕ້ອງມີຄວາມຕ້ອງການບາງຢ່າງນໍາກິຈກັມຂອງການດໍາຣົງຊີວິດປະຈໍາວັນຊຶ່ງຖືກພົບເຫັນຢູ່ໃນການປະເມີນຜົນ/ການກວດກັ່ນເບິ່ງສັ້ນໆ.

TSOA ແມ່ນສໍາລັບຜູ້ຮັບເອົາການເບິ່ງແຍງດູແລຜູ້ທີ່ມີຊັບສິນທາງດ້ານການເງິນສູງກວ່າທີ່ຖືກອະນຸຍາດໃຫ້ຕາມທັມມະດາສໍາລັບApple Health LTSS; ປະມານ $53,000 ສໍາລັບຄົນໂສດຄົນນຶ່ງແລະສອງເທົ່າສໍາລັບຄົນແຕ່ງງານ.

ການບໍຣິການທີ່ຖືກເອົາໃຫ້ພາຍໃຕ້TSOA ຈະບໍ່ຖືກກ່ຽວນໍາການກອບກູ້ເອົາມູນມໍຣະດົກແລະຄວາມຮັບຜິດຊອບຂອງລູກຄ້າ (ເງິນຈ່າຍຮ່ວມ) ຕາມທີ່ຖືກບັນຣະຍາຍຢູ່ຫນ້າ6-10 ຢູ່ໃນປຶ້ມຫົວນີ້.

### TSOA ສໍາລັບບຸກຄົນຜູ້ທີ່ມີຜູ້ເບິ່ງແຍງດູແລຜູ້ທີ່ບໍ່ຖືກຈ່າຍເງິນໃຫ້

TSOA ເອົາໃຫ້ທາງເລືອກຂອງການບໍຣິການກວ້າງຂວາງຫລາຍໆທາງສໍາລັບຜູ້ໃຫ້ການເບິ່ງແຍງດູແລພາຍໃນຂອບເຂດຂອງໂຄງການ:

- ຣາຍຣະອຽດກ່ຽວກັບການໃຫ້ການເບິ່ງແຍງດູແລ, ແຫລ່ງຊ່ວຍເຫລືອຢູ່ໃນຊຸມນຸມຊົນຂອງທ່ານ, ການບໍຣິການທີ່ມີໄວ້ໃຫ້ແລະແນວອື່ນໆ.
- ການປຶກສາອີງຕາມຫລັກຖານ.
- ກຸ່ມອູ້ມຊູແລະການໃຫ້ຄໍາປຶກສາ.
- ອຸບປະກອນພະຍາບານທີ່ທົນທານ
- ໂອກາດຈະໄດ້ຮັບສໍາລັບທາງເລືອກການເບິ່ງແຍງດູແລຊໍາຊາຫລືວຽກບ້ານຫລືການອູ້ມຊູນໍາວຽກເລັກນ້ອຍ.
- ໂອກາດສໍາລັບການຝຶກອົບຣົມ.

### TSOA ສໍາລັບບຸກຄົນຜູ້ທີ່ບໍ່ມີຜູ້ເບິ່ງແຍງດູແລຜູ້ທີ່ບໍ່ຖືກຈ່າຍເງິນໃຫ້

ທາງເລືອກເອົາການບໍຣິການກໍມີໄວ້ໃຫ້ຜ່ານTSOA ສໍາລັບບຸກຄົນຜູ້ທີ່ບໍ່ມີຜູ້ເບິ່ງແຍງດູແລທີ່ບໍ່ຖືກຈ່າຍເງິນໃຫ້ຈະລວມເອົາ:

- ການເບິ່ງແຍງດູແລສ່ວນຕົວ.
- ອຸບປະກອນພະຍາບານທີ່ທົນທານ.
- ຣະບົບການຕອບໂຕ້ຕໍ່ເຫດການສຸກເສີນສ່ວນຕົວ(PERS).
- ໂອກາດສໍາລັບການຝຶກອົບຣົມ.
- ໂຄງການAdult Day Health.
- ຣາຍຣະອຽດກ່ຽວກັບແຫລ່ງຊ່ວຍເຫລືອຢູ່ໃນຊຸມນຸມຊົນຂອງທ່ານ, ການບໍຣິການທີ່ມີໄວ້ໃຫ້ແລະຫລາຍໆຢ່າງອີກ..

ໃຫ້ຕິດຕໍ່ກັບຫ້ອງການ CLCທ້ອງຖິ່ນຂອງທ່ານໄດ້ທີ່ www.waclc.org,ໂທຫາເລກໂທຟຣີ 1-855-567-0252 ເພື່ອຈະຖືກຕິດແທດໃສ່ຫ້ອງການ CLC ທ້ອງຖິ່ນຂອງທ່ານຫລືແວ່ເຂົ້າຢ້ຽມ www.dshs.wa.gov/altsa/stakeholders/medicaid-transformation-demonstration ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບໂຄງການອັນນີ້.

## ແຫລ່ງຊ່ວຍເຫລືອເພີ້ມເຕີມສໍາລັບຜູ້ເບິ່ງແຍງດູແລຜູ້ທີ່ບໍ່ຖືກຈ່າຍເງິນໃຫ້

ມັນມີແຫລ່ງຊ່ວຍເຫລືອຫລາຍໆບ່ອນເພື່ອຈະຊ່ວຍເຫລືອອູ້ມຊູຄອບຄົວແລະຫມູ່ເພື່ອນຜູ້ທີ່ໃຫ້ການເບິ່ງແຍງດູແລທີ່ບໍ່ໄດ້ຖືກຈ່າຍເງິນໃຫ້.

### ໂຄງການ Family Caregiver Support Program (FCSP)

ໂຄງການ Family Caregiver Support Program ຊ່ວຍເຫລືອອູ້ມຊູຜູ້ເບິ່ງແຍງດູແລທີ່ບໍ່ໄດ້ຖືກຈ່າຍເງິນໃຫ້ຂອງຜູ້ໃຫຍ່ອາຍຸ 18 ປີຫລືແກ່ກວ່າຜູ້ທີ່ບໍ່ມີເງື່ອນໄຂໄດ້ຮັບຫລືຜູ້ທີ່ບໍ່ສົນໃຈໃນໂຄງການ Apple Health LTSS. ທ່ານບໍ່ຕ້ອງໄດ້ຂໍເອົາຫລືກໍາລັງໄດ້ຮັບ Apple Health LTSS.

ເພື່ອຈະສວຍໂອກາດໃນແຫລ່ງຊ່ວຍເຫລືອເຫລົ່ານີ້.ພະນັກງານສາມາດຊ່ວຍເຫລືອທ່ານ:

- ຊອກຫາແຫລ່ງຊ່ວຍເຫລືອ/ການບໍລິການໃນທ້ອງຖິ່ນ.
- ຊອກຫາກຸ່ມອູ້ມຊູຜູ້ໃຫ້ການເບິ່ງແຍງດູແລແລະການໃຫ້ຄຳປຶກສາ.
- ໄດ້ຮັບການຝຶກອົບຮົມໃນເຣື່ອງການໃຫ້ການເບິ່ງແຍງດູແລອັນເຈາະຈົງຫລືເຄື່ອງໃຊ້ສອຍ/ອຸບປະກອນຂອງຜູ້ໃຫ້ການເບິ່ງແຍງດູແລ.
- ຮຽນຮູ້ກ່ຽວກັບທາງເລືອກຂອງການເບິ່ງແຍງດູແລແທນຊົ່ວຄາວຖ້າຫາກວ່າທ່ານເປັນຜູ້ເບິ່ງແຍງດູແລແລະຕ້ອງການເວລາພັກ.
- ເວົ້າເຣື່ອງບັນຫາສະເພາະເຈາະຈົງທີ່ທ່ານມີຢູ່ແລະສະເນີຣາຍຣະອຽດການເຮັດວຽກແລະຄຳແນະນຳໃນການເບິ່ງແຍງດູແລ.

ຕິດຕໍ່ຫາຫ້ອງການ CLC ທ້ອງຖິ່ນຂອງທ່ານໄດ້ທີ່ www.waclc.org ຫລືໂທຫາເລກໂທຟຣີໄດ້ທີ່ 1-855-567-0252. ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບໂຄງການອັນນີ້ຫລືໄປທີ່ www.dshs.wa.gov/altsa/home-and-community-services/caregiver-resources.
ກົດກຳນົດຂອງ
ເງື່ອນໄຂໄດ້ຮັບບາງຢ່າງຈະຖືກໃຊ້ແລະການບໍຣິການຈະແຕກຕ່າງກັນໄປແຕ່ລະຊຸມຊົນໄປຫາຊຸມຊົນ.

*The Family Caregiver Handbook* (DSHS 22-277) ແມ່ນປື້ມນ້ອຍຟຣີທີ່ສາມາດຊ່ວຍທ່ານໃຫ້ຮຽນຮູ້ກ່ຽວກັບທຸກໆເຣື່ອງຂອງການໃຫ້ການເບິ່ງແຍງດູແລ. ຈົ່ງເບິ່ງຢູ່ຂ້າງລຸ່ມນີ້ເພື່ອຣາຍຣະອຽດສຳລັບການສັ່ງເອົາຫລືອ່ານຢູ່ທາງອິນເຕີແນດໄດ້ທີ່ www.dshs.wa.gov/sites/default/files/publications/documents/22-277.pdf.

# ຣາຍຣະອຽດເພີ້ມເຕີມ

## ການສັ່ງເອົາເອກສານຕີພິມ

ທ່ານຈະສັ່ງເອົາປື້ມນ້ອຍຄູ່ມືຫົວນີ້ແລະເອກສານພິມອອກມາຂອງກົມDSHS ແນວອື່ນໂດຍຜ່ານ Washington State Department of Enterprise Services (DES) – Printing and Imaging. ໃຫ້ເຂົ້າເບິ່ງແວບໄຊທ໌ຂອງເຂົາເຈົ້າໄດ້ທີ່: https://prtonline.myprintdesk.net/DSF/storefront.aspx?6xni2of2cF1OAY5jHVvlUrUsqozrCjF3xgL/DdBBf+Sre9e470j4aMR+LcLIWmKS.

ການຮ້ອງຂໍເອົາເອກສານທີ່ພິມອອກມາຍັງຈະຖືກສັ່ງເອົາໄດ້ອີກຄືກັນໂດຍຜ່ານ:
ອີແມລ໌ໄດ້ທີ່: printing@des.wa.gov
ໂທຣະສັບໄດ້ທີ່: 360-664-4343

ໃຫ້ທ່ານໝັ້ນໃຈວ່າໄດ້ຂຽນຊື່ຂອງເອກສານພິມອອກມາ, ເລກຂອງເອກສານພິມອອກມາ, ແລະຊື່ຂອງຜູ້ຕິດຕໍ່ແລະທີ່ຢູ່ບ່ອນສົ່ງໄປສະນີ.

ເອກສານພິມອອກມາທຸກໆຢ່າງ,ລວມທັງຊຸດທີ່ຖືກແປພາສາແລ້ວ,ທີ່ຖືກບົ່ງຢູ່ໃນປື້ມນ້ອຍຫົວນີ້ແລະຫລາຍໆແນວອີກສາມາດຖືກພົບເຫັນໄດ້ຫລືອ່ານທາງອອນລາຍນ໌ໄດ້ທີ່ www.dshs.wa.gov/office-of-the-secretary/forms or www.hca.wa.gov/apple-health-client-forms.

*DSHS* ຈະບໍ່ແບ່ງແຍກຊົນຊັ້ນວັນນະໃນການຮັບໃຊ້ຫລືການເຮັດສັນຍານຳບຸກຄົນຍ້ອນຜິວພັນ, ສີສັນ, ເຊື້ອຊາດດັ້ງເດີມ, ເພດ, ການປັບຕົວເຂົ້າສະພາບທາງເພດ, ອາຍຸ, ສາສນາ, ລັດທິຄວາມເຊື່ອຖື, ຖານະພາບການແຕ່ງງານ,ຄວາມເສັຽອົງຄະ, ຫລືສະພາບນັກຮົບເກົ່າສະມັຍວຽດນາມ, ຫລືການປາກົດມີຢູ່ຂອງສະພາບພິການທາງຮ່າງກາຍ, ຈິດໃຈ, ຫລືຄວາມເສັຽອົງຄະດ້ານຄວາມຮູ້ສຶກ.

## ເລກໂທຣະສັບຂອງ Home and Community Services Regional

ໃຫ້ເບິ່ງແຜນທີ່ເພື່ອຈະຊອກຫາທ້ອງຖິ່ນທີ່ທ່ານອາສັຍຢູ່. ໃຫ້ໂທຫາເລກທີ່ຖືກບົ່ງໄວ້ສໍາລັບເຂດທ້ອງຖິ່ນຂອງທ່ານແລະຖາມຫາຫ້ອງການ HCS ທ້ອງຖິ່ນທີ່ໃກ້ບ້ານທ່ານທີ່ສຸດ.




**ທ້ອງຖິ່ນ 1**

**509-568-3700**
**1-800-459-0421**
**TTY 509-329-3698**

Adams, Asotin, Benton, Chelan, Columbia, Douglas, Ferry, Franklin, Garfield, Grant, Kittitas, Klickitat, Lincoln, Okanogan, Pend Oreille, Spokane, Stevens, Walla Walla, Whitman, ແລະ Yakima Counties

**ທ້ອງຖິ່ນ 2**

**206-341-7600**
**1-800-346-9257**
**TTY 1-800-833-6384**

Island, King, San Juan, Skagit, Snohomish, ແລະ Whatcom Counties

**ທ້ອງຖິ່ນ 3**

**253-476-7200**
**1-800-442-5129**
**TTY 253-593-5471**

Clallam, Clark, Cowlitz, Grays Harbor, Jefferson, Kitsap, Lewis, Mason, Pacific, Pierce, Skamania, Thurston, າມດ Wahkiakum Counties

---

## ພະແນກປົກປ້ອງຜູ້ໃຫຍ່

**ພວກເຮົາຫມົດທຸກຄົນເປັນເພື່ອນຮ່ວມງານກັນຕໍ່ຕ້ານການກົດຂີ່ຂົ່ມເຫັງຜູ້ໃຫຍ່**

ການກົດຂີ່ຂົ່ມເຫັງຜູ້ໃຫຍ່ທີ່ອ່ອນແອ (ບຸກຄົນຜູ້ທີ່ຕ້ອງການຄວາມຊ່ວຍເຫລືອທີ່ຈະເບິ່ງແຍງຕົນເອງ) ສາມາດເກີດຂຶ້ນໄດ້ໃນທຸກໆເວລາ, ທຸກໆສະຖານທີ່.້າສຫສສືບສວນການກ່າວຫາໃນການກົດຂີ່ຂົ່ມເຫັງ, ການປ່ອຍປະລະເລີຍ, ການສະແວງຫາຜົນປະໂຍດ, ຫລືການປະຖິ້ມຜູ້ໃຫຍ່ອ່ອນແອ.

ຖ້າຫາກວ່າທ່ານສົງສັຍວ່າມີການກົດຂີ່ຂົ່ມເຫັງ, ການປ່ອຍປະລະເລີຍ, ຫລືການສະແວງຫາຜົນປະໂຍດໃສ່ຜູ້ໃຫຍ່ອ່ອນແອ:

**ໂທຫາເລກໂທຟຣີຂອງ້ຳສຫສໄດ້ທີ່ເລກ**

**1-866-363-4276**

DSHS TOLL FREE 1-866-ENDHARM
Voice/TTY Accessible 1-800-737-7931
1-866-363-4276
Washington State Department of Social and Health Services

## ໝາຍເຫດແລະເລກໂທລະສັບ

Washington State
Department of Social
& Health Services

*Transforming lives*